

# 占芭 ຈຳປາ

## ລັດຖະບານຈີນເພີ່ມທະວີການສ້າງສັນຄຸນທາດວິທະຍາສາດຂອງພົນລະເມືອງ

## ລາຊະວັງເກົ່າປັກກິ່ງ

ລາຄາ: 13000 ກີບ ¥10
ISSN 1673-3266
5/2006
总第9期

# MEKONG HOTEL

## 湄公酒店

服务中国人，万象有湄公；入住湄公，如在家中

# ໂຮງແຮມ ແມ່ຂອງ




湄公酒店，是中老合资并成立于 1994 年。酒店拥有四栋建筑楼，是首都万象市最大的建筑楼群之一。楼内设有：标房、商务公寓和写字间等。配套服务项目：北京饭庄、夜总会、卡拉 OK 包房、商务中心、会议室、洗熨房、停车场等。全部客房配有：空调、中餐、中文电视、电话、冰箱、卫生间等服务设施。

湄公酒店位于万象市中心，距商业区仅 500 米，离机场 2 公里。前临老挝国家重要的交通枢纽 13 号公路，后依东南亚名河—湄公河 300 米，与泰国隔河相望，地理位置优越，交通便利。客房宽敞明亮，舒适安全，设备齐全，并配有中英文服务和 24 小时保安服务，是商务、旅游、会议、办公及中长期居住和设立办事处的最佳场所。



## Mekong Hotel.We’ve got it all!

Mekong Hotel offers excellent facilities in a superb location,with the mighty Mekong river flowing just be-hind and at a reasonable price.

Our facilities includes hotel rooms,furnished apartment,office space,the Beijing Restaurant,Friendship Night Club,Karaoke and a fully equipped business center.Free transfer service from and to airport both ways.

Whether you need somewhere to sleep,work or relax,the Mekong Hotel is a ideal place.







Address:Luangprabang Rd.Tel:(856 – 21)212937-9 Fax: (856 – 21)212822
E – mail:sales@mekong-ht.com,Website:www.mekong-ht.com











ບໍລິການນຳທ່ຽວພາຍໃນແລະຕ່າງປະເທດ

ບໍລິການຂາຍປີ້ຍົນພາຍໃນແລະຕ່າງປະເທດ

ບໍລິການຂາຍປີ້ລົດໄຟ ລົດບັດໄປປະເທດໄທ,ຫວຽດນາມ

ບໍລິການເຊົ່າລົດເກົ໋ງ ລົດຈິບຖ0. ລົດຕູ້12,15ບ່ອນນັ່ງ ລົດບັດ25,35,45 ບ່ອນນັ່ງ

ບໍລິການແລ່ນວີຊາໄປຕ່າງປະເທດ





ສົນໃຈເຊີນຕິດຕໍ່: ບໍລິສັດທ່ອງທ່ຽວຄຳຫລ້າຈຳກັດ

042/3 ຖະໜົນຟ້າງຸ່ມ ບ້ານມີໄຊ ເມືອງຈັນທະບູລີ

ແຂວງນະຄອນຫລວງວຽງຈັນ ສ.ປ.ປ.ລາວ

Tel/Fax: (856-21) 218677, 218107

Mobile: (856-20) 5606000, 5620161, 5519334

E-mail: khamlatours39@yahoo.com

www.khamla.com

| Inbound Tour | Outbound Tour |
|---|---|
| We provide: | We provide: |
| Tour in Vientiane | Tour to China |
| Tour in VangViene | Tour to Malaysia |
| Tour in Luangprabang | Tour to VietNam |
| Tour in Pakze | Tour to Cambodia |
| Tour in Northern Laos | Tour to Thailand |
| Tour in Southern Laos | Tour to asia |

# ສາລະບານ

5/2006 总第9期



## [特 别 报 道] ຂ່າວພິເສດ

04 ລັດຖະບານຈີນເພີ່ມທະວີການສ້າງສັນຄຸນທາດວິທະຍາສາດຂອງພົນລະເມືອງ

## [中 国 之 窗] ປ່ອງຢ້ຽມເມືອງຈີນ



08 ລັດຖະບານຈີນສະໜອງປຶ້ມແຜນຜັງເຄຫະມາດຖານລະດັບຊາດທີ່ເປັນລະບົບໃນໂຕເມືອງນ້ອຍ ໃຫ້ແກ່ຊາວກະສິກອນ
10 ມາດຕາການ 5 ປະການຊຸກນຳບາດກ້າວໂຕເມືອງຂອງຈີນຂະຫຍາຍຕົວຢ່າງສົມບູນ
12 ສ.ປຈີນຈະລົງເລິກຊຸກຍູ້ແຜນປະຕິບັດອາຫານປອດສານພິດ
14 ສປຈີນຈະປັບປຸງລະບອບປະກັນສັງຄົມໃຫ້ສົມບູນຕື່ມອີກ
16 ປະເທດຈີນຈະອອກແຮງສ້າງສັນລັດຖະບານບໍລິການຮັບຜິດຊອບ




ລາຍມືປະທັບບົນແຜ່ນດິນ ຖ່າຍພາບ: ໂຈວຈົງສື
印在大地上的指纹 周忠仕 摄影

主　　办：云南省对外文化交流协会
编辑出版：《占芭》杂志社
总 顾 问：丹　增 晏友琼 梁公卿 刘　平 苏正国
总 编 辑：郑　明
副总编辑：戴世平
执行总编辑：杨　云
编辑总监：董保延
责任编辑：苏雯雯
美术总监：祝　群
发行主任：禹正玉
老文译审：黄　冰
翻　　译：黄　冰　白厚启
老文录入：白厚启

发行范围：国内外公开发行
出版日期：每月五日
邮发代号：64–36
国际标准刊号：ISSN 1673–3266
国内统一刊号：CN53C1200 / D

ຈັດທຳໂດຍ: ສະມາຄົມແລກປ່ຽນວັດທະນະທຳກັບຕ່າງປະເທດ ແຂວງຢູນນານແຫ່ງ ສ ປ ຈີນ
ຮຽບຮຽງພິມຈຳໜ່າຍ: ສຳນັກພິມວາລະສານ《ຈຳປາ》
ປະທານທີ່ປຶກສາ: ຕານເຈັນ ຢຽນຢຽວສົງ ແລງກົງຊິ ຫຼິວພິງ ຊູເຈີນກົ່ວ
ຫົວໜ້າບັນນາທິການ: ເຈີນໝິງ
ຮອງຫົວໜ້າບັນນາທິການ: ຕ້າຍສືພິງ
ຫົວໜ້າບັນນາທິການບໍລິຫານ: ຢາງຢູນ
ຜູ້ຄຸມງານ ບັນນາທິການ: ຕົງປາວຢຽນ
ບັນນາທິການປະຈຳ: ໂຫຼຮ່ານ ຊູເວີນເວີນ
ຜູ້ຄຸມງານຝ່າຍສິລະປະ: ຈູ້ສິນ
ອອກແບບ: ຝູຊາວຮູຍ
ບັນນາທິການ ພາສາລາວ: ຮວງປິນ
ຜູ້ພິມພາສາລາວ: ຫຼິວເຢີນເຫົາ
ຜູ້ແປພາສາ: ຮວງປິນ
ພິມຈຳໜ່າຍເປີດເຜີຍ: ພາຍໃນແລະຕ່າງປະເທດ
ອອກຈຳໜ່າຍ: ວັນທີ 5 ທຸກເດືອນ
ລະຫັດວາລະສານມາດຖານສາກົນ: ISSN 1673–3266
ລະຫັດວາລະສານປະເທດຈີນ: CN53–1200/D
http: la.yunnan.cn
E–mail: ynzhanba@163.com
ສະຖານທີ່: ເປີເຮືອນ 76 ຖະໜົນຮວາຊານໝານລູ່ນະຄອນຄຸນໝິງແຂວງຢູນນານ
ລະຫັດໄປສະນີ: 650021 ເບີໂທ: 0086–0871–3621079 ໂທລະເລກ: 0086–0871–3621069

## [环 球 扫 描] ສະແກນຮອບໂລກ




18 ສະຫະປະຊາຊາດຮຽກຮ້ອງໃຫ້ຄຸ້ມຄອງຊັບພະຍາກອນນ້ຳມີປະສິດທິພາບກວ່າເກົ່າ

20 ການຈັດກອງປະຊຸມໂຕະມົນກ່ຽວກັບການສຶກສາແລະການຝຶກອົບຮົມ--
ເປົ້າໝາຍການພັດທະນາສະຫັດສະວັດຂອງອົງການສະຫະປະຊາຊາດ


## [中 老 交 往] ການໄປມາຫາສູ່ກັນລະຫວ່າງຈີນ-ລາວ




22 ລັດຖະມົນຕີຕ່າງປະເທດຂອງລາວກ່າວເນັ້ນເພີ່ມທະວີສາຍພົວພັນຮ່ວມມືກັບຈີນ

23 ທ່ານຈູມມະລີ ໄຊຍະສອນໄດ້ຖືກເລືອກຕັ້ງເປັນເລຂາທິການໃຫຍ່ພັກປະຊາຊົນປະຕິວັດລາວ


## [老 挝 印 象] ພາບປະທັບໃນເມືອງລາວ


24 ເມືອງລາວ:ເມືອງແຫ່ງພຸດທະສາສະໜາທີ່ມີສັນຕິສຸກອົບອຸ່ນ


## [文 化 博 览] ລຽບຊົມວັດທະນະທຳ




28 ຊິ່ນຊົມປີ້ມຍອຍຈີນ

30 ງິ້ວປັກກິ່ງ---ຍອດແຍ້ປະຈຳຊາດຈີນ

32 ປຽບໄມ້ຂາໂຖກເຖກ


## [旅 游 纵 横] ການທ່ອງທ່ຽວທັດສະນາຈອນ




34 ລາຊະວັງເກົ່າປັກກິ່ງ

38 ຈ້ຽນສວຍ--ເມືອງວັດທະນະທຳບູຮານປະຫວັດສາດຈີນ


## [今 日 云 南] ຢູນນານໃນວັນນີ້




42 ແຂວງຢູນນານເລີ່ມດຳເນີນສ້າງສາຊົນນະບົດໃໝ່ຮອບດ້ານ

44 ຢູນນານເລັ່ງລັດສ້າງສາອຸດສາຫະກຳຂໍ້ມູນຂ່າວສານແລະເອເລັກໂຕຣນິກລັດຖະການ

46 ການຮ່ວມມືດ້ານການສຶກສາຂອງແຂວງຢູນນານກັບປະເທດອ້ອມຂ້າງມີໝາກຜົນຢ່າງມະຫາສານ

48 ໂຄງການທ່ອງທ່ຽວອຸດສາຫະກຳລາຍທຳອິດຂອງຢູນນານໄດ້ເປີດກວ້າງຕໍ່ແຂກທ່ອງທ່ຽວ


## [东 盟 快 讯] ຈັບກະແສຂ່າວອາຊຽນ




52 ຫວຽດນາມແລະກຳປູເຈຍສະແດງວ່າຈະເພີ່ມທະວີສາຍພົວພັນຮ່ວມມືມິດຕະພາບອັນເປັນມູນເຊື້ອຂອງສອງປະເທດ

53 ໄຂກອງປະຊຸມສຸດຍອດກ່ຽວກັບທຸລະກິດກອງປະຊຸມແລະງານວາງສະແດງຈີນ--ອາຊຽນ
ເປັນຄັ້ງທຳອິດ

56 ໝາກໄມ້ຂອງຈີນສົ່ງກິ່ນຫອມໄປທົ່ວຕະຫລາດອາຊີອາຄະເນ


## [民 族 风 情] ຮີດຄອງພື້ນແຜ່ນຂອງຊົນເຜົ່າ




58 ບຸນດື່ມນົມສົ້ມຂອງເຜົ່າຕີເບດ

60 ສະຖາປັດຕະຍະກຳຊົນເຜົ່າປ່າຍທີ່ມີທຳນອງເອກະລັກສະເພາະ


## [为 您 服 务] ບໍລິການທ່ານ


63 ເນີຍແຂວງແບ້ຂອງຢູນນານ


## [学 汉 语] ຮຽນພາສາຈີນ


64 ທ່ຽວຊົມສວນສາທາລະນະປ່າໄມ້ຊີ່ຊ່ານທີ່ຄຸນໝິງ



# ລັດຖະບານຈີນເພີ່ມທະວີການສ້າງ ສັນຖຸນທາດວິທະຍາສາດຂອງພົນລະເມືອງ

## 中国政府加强全民科学素质建设

中国国务院近日向全社会公布了《全民科学素质行动计划纲要（2006－2010－2020年）》，这标志着中国全民科学素质建设正式纳入了党和国家工作大局，进入了政府推动、全民参与的新时期。《纲要》将今后十五年实施全民科学素质行动计划的指导方针概括为“政府推动，全民参与，提升素质，促进和谐”。

ສຳນັກງານຄະນະລັດຖະບານຈີນໄດ້ປະກາດ《ໂຄງການແຜນປະຕິບັດຄຸນທາດວິທະຍາສາດຂອງທົ່ວປວງຊົນ(ປີ2006--2020)》ຕໍ່ທົ່ວສັງຄົມ,ມັນໄດ້ເປັນຂີດໝາຍທີ່ເອົາການສ້າງສັນຄຸນທາດວິທະຍາສາດຂອງພົນລະເມືອງຈີນບັນຈຸເຂົ້າວຽກງານກວມລວມຂອງພັກແລະລັດຢ່າງເປັນທາງການ,ໄດ້



ກ້າວສູ່ຍຸກສະໄໝໃໝ່ທີ່ລັດຖະບານກະຕຸກຊຸກຍູ້ແລະທົ່ວປວງຊົນເຂົ້າຮ່ວມ. 《ໂຄງການ》ໄດ້ສະຫລຸບສັງລວມທິດຊີ້ນຳຂອງແຜນປະຕິບັດຄຸນທາດວິທະຍາສາດຂອງທົ່ວປວງຊົນທີ່ຈະປະຕິບັດພາຍຫຼັງນີ້ 15 ປີຄື: "ລັດຖະບານກະຕຸກຊຸກຍູ້, ທົ່ວປວງຊົນເຂົ້າຮ່ວມ, ຍົກສູງຄຸນທາດແລະຊຸກຍູ້ສົ່ງເສີມໃຫ້ມີຄວາມສະໝົມກົມກຽວ".



《ໂຄງການ》ຊີ້ອອກວ່າ: ເມື່ອຮອດປີ 2020, ລະດັບຄຸນທາດວິທະຍາສາດຂອງພົນລະເມືອງຈີນຈະເຖິງລະດັບຂັ້ນຕົ້ນສະຕະວັດທີ 21 ຂອງປະເທດຈະເລີນທີ່ສຳຄັນໃນໂລກ. ຕາມນັ້ນ, ການສຶກສາແລະເຜີຍແຜ່ວິທະຍາສາດ--ເຕັກນິກຂອງຈີນກໍ່ຈະມີການພັດທະນາຢ່າງໄວວາ, ກາຍເປັນລະບົບຄ່ອນຂ້າງສົມບູນແດ່ສຳລັບພື້ນຖານໂຄງລ່າງ, ເງື່ອນໄຂຮັບປະກັນ, ການຕິດຕາມສັງເກດຕີລາຄາແລະການຈັດຕັ້ງປະຕິບັດການສ້າງສັນຄຸນທາດວິທະຍາສາດຂອງພົນລະເມືອງ, ໃນທາງດ້ານກວມລວມແລ້ວຄຸນທາດວິທະຍາສາດຂອງພົນລະເມືອງກໍ່ຈະມີການຍົກສູງຂຶ້ນເປັນການໃຫຍ່.

ເພື່ອບັນລຸເຖິງເປົ້າໝາຍດັ່ງກ່າວ, 《ໂຄງການ》ໄດ້ເລັ່ງຈຸດສຸມໃສ່ໄລຍະ "ແຜນການ 5 ປີຄັ້ງທີ 11", ໄດ້ສະເໜີເປົ້າໝາຍຕົ້ນຕໍຮອດປີ 2010, ມີການພັດທະນາອ່າວໄວແດ່ໃນທາງການສຶກສາເຜີຍແຜ່ວິທະຍາສາດ--ເຕັກນິກ, ຄຸນທາດວິທະຍາສາດຂອງພົນລະເມືອງກໍ່ຈະມີການຍົກສູງຢ່າງເດັ່ນຊັດ, ບັນລຸ



ເຖິງລະດັບທ້າຍທົດສະວັດທີ 8 ສະຕະວັດທີ 20 ຂອງປະເທດຈະເລີນໃນໂລກ.

ພ້ອມກັນນັ້ນ 《ໂຄງການ》 ຍັງສະເໜີເປົ້າໝາຍຕົວຈິງສາມດ້ານທີ່ຈະບັນລຸໃນປີ 2010 ຄືະສົ່ງເສີມໃຫ້ສ້າງທັດສະນະພັດທະນາທາງວິທະຍາສາດປາກົດຜົນເປັນຈິງ;ເອົາພຶດຕິກຳຄຸນທາດວິທະຍາສາດຊຸມຊົນທີ່ເປັນຈຸດສຸມຊັກຈູງຄວາມຍົກສູງຄຸນທາດວິທະຍາສາດກວມລວມຂອງທົ່ວປວງຊົນ;ການສຶກສາແລະເຝິກອົບຮົມວິທະຍາສາດ,ການພັດທະນາແລະຊົມໃຊ້ຊັບພະຍາກອນຮ່ວມກັນເຜີຍແຜ່ວິທະຍາສາດ,ຄວາມສາມາດຖ່າຍທອດວິທະຍາສາດ--ເຕັກນິກຂອງສື່ມວນຊົນແລະພື້ນຖານໂຄງລ່າງເປັນຕົ້ນຊຶ່ງເປັນພື້ນຖານສ້າງສັນຄຸນທາດວິທະຍາສາດຂອງພົນລະເມືອງກໍ່ໄດ້ຮັບການເພີ່ມທະວີຢ່າງເຂັ້ມແຂງ,ມີໂອກາດແລະຊ່ອງທາງແກ່ພົນລະເມືອງເພື່ອຍົກສູງຄຸນທາດວິທະຍາສາດຂອງຕົນເອງກໍ່ຫລາຍຂຶ້ນຢ່າງເດັ່ນຊັດ.

## ເປົ້າໝາຍຈຸດສຸມທັນໜ້າສູ່ຊຸມຊົນ 4 ປະເພດ

ໂດຍອີງຕາມສະພາບຄຸນທາດວິທະຍາສາດໃນປັດຈຸບັນຂອງພົນລະເມືອງຈີນແລະການພັດທະນາເສດຖະກິດສັງຄົມພາກຕົວຈິງ, 《ໂຄງການ》 ໄດ້ສະເໜີໃນໄລຍະ "ແຜນການ 5 ປີຄັ້ງທີ 11 ",ຖືເອົາຄົນຜູ້ບໍ່ເຖິງກະສຽນອາຍຸ,ປະຊາກອນຜູ້ອອກແຮງງານໃນໂຕເມືອງ,ພະນັກງານຊີ້ນຳແລະລັດຖະກອນເປັນຊຸມຊົນຈຸດສຸມ 4 ປະເພດໃນການສ້າງສັນຄຸນທາດວິທະຍາສາດຂອງພົນລະເມືອງ,ເອົາພຶດຕິກຳຄຸນທາດວິທະຍາສາດຂອງຊຸມຊົນທີ່ເປັນຈຸດສຸມຊັກຈູງຄວາມຍົກສູງຄຸນທາດວິທະຍາສາດກວມລວມຂອງທົ່ວປວງຊົນ.

## ຊ່ອງທາງຈຸດສຸມປະຕິບັດໂຄງການພື້ນຖານ 4 ດ້ານ

ແນໃສ່ບັນຫາຕົ້ນຕໍທີ່ມີຢູ່ແລະຂໍ້ອ່ອນໃນການສ້າງສັນຄຸນທາດວິທະຍາສາດຂອງພົນລະເມືອງຈີນໃນສະເພາະໜ້ານີ້, 《ໂຄງການ》 ໄດ້ສະເໜີໃນໄລຍະ "ແຜນການ 5 ປີຄັ້ງທີ 11 ",ຈຸດສຸມ

ໃຫ້ປະຕິບັດໂຄງການພື້ນຖານ 4 ດ້ານ, ເພື່ອໃຫ້ພົນລະເມືອງມີໂອກາດແລະຊ່ອງທາງຍົກສູງຄຸນທາດວິທະຍາສາດຂອງຕົນຢ່າງມີປະສິດທິຜົນເພີ່ມເຕີມ:

--ໂຄງການພື້ນຖານສຶກສາແລະຝຶກອົບຮົມວິທະຍາສາດ:ແນໃສ່ບັນຫາທີ່ພົ້ນເດັ່ນໃນສະເພາະໜ້ານີ້ຄືຂາດແຄນຄູອາຈານ, ປຶດສອນ, ວິທີການສອນແລະເງື່ອນໄຂສິດສອນແລະສຶກສາຫຼ້າຫລັງບໍ່ຕອບສະໜອງກັບຄວາມຕ້ອງການເພື່ອສຶກສາຫຼືຝຶກອົບຮົມວິທະຍາສາດ, ເນັ້ນໜັກການສ້າງສັນແລະດັດປັບສັງລວມຊັບພະຍາກອນການສຶກສາແລະຝຶກອົບຮົມວິທະຍາສາດ, ພ້ອມນັ້ນຍັງເນັ້ນໜັກການໝູນໃຊ້ຊັບພະຍາກອນສັງຄົມເປີດການສຶກສາແລະຝຶກອົບຮົມວິທະຍາສາດ.

--ໂຄງການຮົ່ມໃຊ້ຮ່ວມກັນແລະພັດທະນາຊັບພະຍາກອນເຜີຍແຜ່ວິທະຍາສາດ:ແນໃສ່ບັນຫາໃນສະເພາະໜ້ານີ້ຄື: ຂາດເຂີນຜະລິດພັນເຜີຍແຜ່ວິທະຍາສາດແລະແຫຼ່ງຂໍ້ມູນຂ່າວສານ, ຂາດການຊຸມໂຮມດັດປັບສັງລວມແລະຮົ່ມໃຊ້ຮ່ວມກັນແລະມີການສ້າງສັນຊ້ຳຊ້ອນ, ເນັ້ນໜັກການບໍລິການສາທາລະນະເຜີຍແຜ່ວິທະຍາສາດຢ່າງທ່ຽງທຳຕ່າງມີຜົນທົ່ວໄປ, ພັດທະນາການປະດິດຄິດແຕ່ງເຜີຍແຜ່ວິທະຍາສາດ, ແລະຊຸກຍູ້ການຮົ່ມໃຊ້ຊັບພະຍາກອນເຜີຍແຜ່ວິທະຍາສາດຮ່ວມກັນຢ່າງແທ້ຈິງ.

--ໂຄງການສ້າງສັນຄວາມສາມາດຖ່າຍທອດວິທະຍາສາດ--ເຕັກນິກສື່ມວນຊົນ:ແນໃສ່ຈຳນວນຖ່າຍທອດວິທະຍາສາດ--ເຕັກນິກຂອງສື່ມວນຊົນສະພາບໃນສະເພາະໜ້ານີ້ບໍ່ພຽງພໍ, ຄຸນະພາບຕ່ຳ, ຄວາມສາມາດກໍ່ອ່ອນແລະບໍ່ໄດ້ເສີມຂະຫຍາຍບົດບາດຢ່າງເຕັມທີ່, ເນັ້ນໜັກໃຫ້ຜັນຂະຫຍາຍບົດບາດສຳຄັນຂອງການຖ່າຍທອດວິທະຍາສາດ--ເຕັກນິກທຸກປະເພດສື່ພາຫະນະຢ່າງເຕັມສ່ວນ, ເສີມທ່າແຮງຖ່າຍທອດຕື່ມອີກ, ຍົກຄຸນະພາບຖ່າຍທອດໃຫ້ສູງ, ເພື່ອຍົກສູງຄວາມສາມາດຖ່າຍທອດວິທະຍາສາດ--ເຕັກນິກຂອງສື່ມວນຊົນຢ່າງມີປະສິດທິຜົນ.



--ໂຄງການພື້ນຖານໂຄງລ່າງເຜີຍແຜ່ວິທະຍາສາດ: ແນໃສ່ບັນຫາຂາດແຄນອຸປະກອນເຜີຍແຜ່ວິທະຍາສາດທີ່ສຸດສຳລັບແຫ່ງຕ່າງ ໆໃນທົ່ວປະເທດໂດຍສະເພາະແມ່ນເຂດພາກຕາເວັນຕົກແລະຮາກຖານ, ອຸປະກອນປະຈຸບັນມີສັບພະຄຸນບອບບາງ, ລະດັບຄຸ້ມຄອງອ່ອນຄອງຄອຍໃຫ້ມີການຍົກສູງຂຶ້ນ, ເນັ້ນໜັກໃຫ້ເພີ່ມທະວີການບໍລິການສາທາລະນະຊົນ, ຕອບສະໜອງຄວາມຕ້ອງການຂອງມະຫາຊົນ; ຊຸກຍູ້ສົ່ງເສີມໃຫ້ກຳລັງສັງຄົມເຂົ້າຮ່ວມການສ້າງສາພື້ນຖານໂຄງລ່າງເຜີຍແຜ່ວິທະຍາສາດ, ພ້ອມທັງອອກແຮງຂະຫຍາຍອຸປະກອນເຜີຍແຜ່ວິທະຍາສາດ, ເພື່ອເສີມຂະຫຍາຍບົດບາດສຳຄັນທ່າມກາງສ້າງສັນຄຸນທາດວິທະຍາສາດຂອງພົນລະເມືອງຢ່າງເຕັມສ່ວນສຳລັບພື້ນຖານໂຄງລ່າງເຜີຍແຜ່ວິທະຍາສາດໃນຫໍວິທະຍາສາດ--ເຕັກນິກ.







# ລັດຖະບານຈີນສະໜອງປື້ມແຜນຜັງເຄຫະມາດຖານລະດັບຊາດທີ່ເປັນລະບົບໃນໂຕເມືອງນ້ອຍໃຫ້ແກ່ຊາວກະສິກອນ

## 中国政府为农民提供系列小城镇住宅国标图集

为了让农民住上经济实用的房屋，中国建设部向中国1887个乡镇提供了“系列小城镇住宅国标图集”，为农民住房建设提供图纸，指导村镇建设活动。

ເພື່ອໃຫ້ຊາວກະສິກອນໄດ້ຢູ່ຫລັງເຮືອນທີ່ຄຸ້ມຄ່າ, ກະຊວງສ້າງສາຈີນໄດ້ສະໜອງ "ປື້ມແຜນຜັງເຄຫະມາດຖານລະດັບຊາດທີ່ເປັນລະບົບໃນໂຕເມືອງນ້ອຍ" ໃຫ້ແກ່ເມືອງນ້ອຍໃນຊົນນະບົດ 1887 ແຫ່ງ, ສະໜອງແຜນຜັງອອກແບບປຸກສ້າງເຮືອນຊານບ້ານຢູ່ໃຫ້ແກ່ຊາວກະສິກອນ, ຊີ້ນຳການເຄື່ອນໄຫວກໍ່ສ້າງໝູ່ບ້ານຊົນນະບົດ. ທ່ານຮວາງເວີຍຮອງລັດຖະມົນຕີກະຊວງສ້າງສາຈີນກ່າວວ່າ: ການປຸກເຮືອນເປັນເປົ້າໝາຍດຳລົງຊີບແລະຄ່າໃຊ້ຈ່າຍທີ່ສຳຄັນໃນຊີວິດຂອງຊາວກະສິກອນຈີນ, ສະນັ້ນເພີ່ມທະວີການກວດກາດູແລແລະຊີ້ນຳການເຄື່ອນໄຫວກໍ່ສ້າງໝູ່ບ້ານຊົນນະບົດ, ຍົກສູງຄຸນະພາບກໍ່ສ້າງເປັນອັນສຳຄັນທີ່ສຸດສຳລັບສ້າງສາຊົນນະບົດ.

ຕາມທີ່ໄດ້ແນະນຳໃຫ້ຮູ້ວ່າ, ກະຊວງສ້າງສາໄດ້ສະໜອງປຶ້ມແຜນຜັງອອກແບບເຄຫະມາດຖານໃຫ້ແກ່ຊົນນະບົດ 1887 ແຫ່ງລວມມີ 22 ເຫຼັ້ມ. ໃນນັ້ນມີເນື້ອໃນເປັນຕົ້ນຄື: ແຜນຜັງອອກ

ແບບສາທິດເຮືອນຢູ່ທຳມະດາໃນຊົນນະບົດ, ແຜນຜັງໂຄງຮ່າງກໍ່ສ້າງ, ແຜນຜັງໂຄງສ້າງແລະແຜນຜັງກໍ່ສ້າງລະບົບສະໜອງແລະລະບາຍນ້ຳໃນເຂດແຄ້ວນ 16 ແຫ່ງ, ແຜນຜັງອອກແບບໄດ້ສະແດງຫຼັກການປະຢັດພະລັງງານແລະຮັກສາສິ່ງແວດລ້ອມ.

ການສະໜອງປຶ້ມແຜນຜັງອອກແບບເຄຫະມາດຖານໃນຊົນນະບົດແມ່ນກະຊວງສ້າງສາມອບໝາຍໃຫ້ສະຖາບັນຄົ້ນຄວ້າອອກແບບການກໍ່ສ້າງມາດຖານຈີນ ຈັດຕັ້ງຜູ້ຊ່ຽວຊານເຮັດສຳເລັດພາຍໃນເວລາສອງປີ, ມັນມີລັກສະນະຊີ້ນຳຄ່ອນຂ້າງໜັກແໜ້ນຕໍ່ການປຸກສ້າງເຄຫະສະຖານຂອງຊາວກະສິກອນໃນຊົນນະບົດ.



ໄປຄຽງຄູ່ກັບລະດັບຊີວິດການເປັນຢູ່ຂອງຊົນນະບົດທະວີສູງຂຶ້ນ, ຊາວກະສິກອນກໍ່ມີຄວາມຮຽກຮ້ອງຕ້ອງການໃໝ່ຕໍ່ເຮືອນໄຂຢູ່ກິນ. ສິ່ງແຜນຜັງລົງສູ່ຊົນນະບົດມັນຈະຫຼີກເວັ້ນການກໍ່ສ້າງຊ້ຳຊ້ອນແລະຄຸນະພາບຕ່ຳໃນຊົນນະບົດ, ປຶ້ມແຜນຜັງປະເພດດັ່ງກ່າວຊຶ່ງເປັນຂອງທີ່ຕ້ອງການດ່ວນເພື່ອສ້າງສາຊົນນະບົດໃໝ່ສັງຄົມນິຍົມໃນປັດຈຸບັນ.

ປີນີ້ ສປຈີນໄດ້ສະເໜີຈະປົວແປງໂສມໜ້າຊົນນະບົດໃຫ້ດີຂຶ້ນໃນທ່າມກາງສ້າງສາຊົນນະບົດໃໝ່ສັງຄົມນິຍົມ, ແລະເນັ້ນໜັກໃຫ້ດຳເນີນຕາມຫຼັກການປະຢັດທີ່ດິນ, ອຸປະກອນຄົບຊຸດ, ປະຢັດພະລັງງານ, ອະນຸຮັກສິ່ງແວດລ້ອມແລະມີສີສັນເອກະລັກພົ້ນເດັ່ນ, ເຮັດໂຄງການສ້າງສາຊົນນະບົດໃຫ້ຮຽບຮ້ອຍດີ, ຊັກຊວນໃຫ້ຊາວກະສິກອນປຸກສ້າງເຮືອນຊານບ້ານຢູ່ຢ່າງສົມເຫດສົມຜົນ, ປົກປ້ອງພາບວິວສະຖາປັດຕະຍະກຳຊົນນະບົດທີ່ມີສີສັນເອກະລັກສະເພາະນັ້ນໄວ້.






## 五大措施引导中国城市化进程健康发展

针对农业劳动力转移和城市化推进中存在的新问题，中国政府采取了五大措施引导城市化进程的健康发展。

# ມາດຕາການ 5 ປະການຊັກນຳບາດກ້າວ ໂຕເມືອງຂອງຈີນຂະຫຍາຍຕົວຢ່າງສົມບູນ

ແນໃສ່ບັນຫາໃໝ່ທີ່ເກີດມີຂຶ້ນທ່າມກາງຫັນຍ້າຍແຮງງານທາງກະສິກຳແລະການຜະລັກດັນໃຫ້ເປັນໂຕເມືອງ,ລັດຖະບານຈີນໄດ້ໃຊ້ມາດຕາການ 5 ປະການ ຊັກນຳບາດກ້າວໂຕເມືອງຂະຫຍາຍຕົວໄປຢ່າງສົມບູນ.

--ປົກປ້ອງສິດທິແຮງງານ.ໃນໂຄງການ "ແຜນການ 5 ປີຄັ້ງທີ 11 "ກໍ່ໄດ້ສະເໜີຄຳຮຽກຮ້ອງອອກຢ່າງຈະແຈ້ງສຳລັບປົກປ້ອງສິດທິແຮງງານ,ເອກະສານນະໂຍບາຍ ສຳລັບລະບອບເບັ້ຍຫວັດເງິນເດືອນຕ່ຳສຸດແລະຄຳຮຽກຮ້ອງປະກັນສັງຄົມພື້ນຖານກໍ່ກຳລັງຄົ້ນຄວ້າຈັດວາງ.

--ການສຶກສາແລະຝຶກອົບຮົມຊາວກະສິກອນ.ຊ່ວງປີ 2005,ພາກການເງິນສູນກາງແລະທ້ອງຖິ່ນໄດ້ຈັດ

ສັນທຶນຮອນສະເພາະກິດ 7 ຕື້ກວ່າຢວນ,ຊ່ວຍໃຫ້ເມືອງທີ່ທຸກຍາກ 592 ເມືອງ,ຍົກເວັ້ນຄ່າປຶ້ມສໍຄ່າຮຽນສາລະພັດແລະສະໜອງຄ່າກິນນອນໃຫ້ແກ່ນັກຮຽນຄອບຄົວທີ່ທຸກຈົນ 17 ລ້ານຄົນ. ລັດຖະບານກາງແລະຄະນະປົກຄອງແຕ່ລະແຂວງໄດ້ຈັດສັນທຶນຮອນພິເສດເພື່ອອຸປະຖຳຄ້ຳຊູການຝຶກອົບຮົມທັນຍ້າຍແຮງງານຊົນນະບົດ,ປີນີ້ຍັງຈະສືບຕໍ່ອອກແຮງພັດທະນາອາຊີວະສຶກສາ.

--ແກ້ໄຂບັນຫາເຊົ່າເຮືອນຖືກແລະການສຶກສາລູກຫຼານ.ຄະນະປົກຄອງຕາມເຂດຊາຍຝັ່ງທະເລຈຳນວນໜຶ່ງໄດ້ເລີ່ມຕົ້ນເຮັດວຽກສະໜອງເຊົ່າເຮືອນຖືກໃຫ້ແກ່ແຮງງານຊົນນະບົດທີ່ເຂົ້າມາໃໝ່ໃຫ້ຮຽບຮ້ອຍດີ,ຍາດແຍ່ງເຮັດໃຫ້ຄ່າເຊົ່າເຮືອນແຕ່ລະເດືອນຕ່ຳກວ່າ 100 ຢວນຫາ 150 ຢວນ.ນອກຈາກນີ້ແລ້ວ ຍັງສະໜອງການສຶກສາອັນດີສົມຄວນແກ່ລູກຫຼານຂອງບຸກຄະລາກອນທີ່ເຂົ້າມາໂຕເມືອງເຮັດວຽກ,ເລື່ອງນີ້ກໍ່ເປັນບັນຫາແທດຈິງທີ່ຄະນະປົກຄອງທຸກຂັ້ນຈະຕ້ອງພະຍາຍາມເຮັດໃຫ້ຮຽບຮ້ອຍດີ.




--ຍົກສູງອັດຕາສ່ວນຕັ້ງພູມລຳເນົາຂອງປະຊາກອນເຄື່ອນທີ່. ຕາມຄຳຮຽກຮ້ອງຂອງລັດຖະບານກາງ,ສຳລັບບຸກຄະລາກອນຜູ້ເຂົ້າສູ່ໂຕເມືອງເຮັດວຽກ ເມື່ອມີອາຊີບສະຖຽນລະພາບຢູ່ໂຕເມືອງແລະມີເຮືອນຢູ່ຄົງທີ່ນັ້ນ ຈະຕ້ອງສ້າງເງື່ອນໄຂໃຫ້ເຂົາເຈົ້າກາຍເປັນຊາວເມືອງເທື່ອລະກ້າວ;ສຳລັບປະຊາກອນຊົນນະບົດມີທີ່ດິນຮັບເໝົາຖືກຫຼວງເກນເອົາໄປເພື່ອສ້າງສາໂຕເມືອງແລະສູນເສຍທີ່ດິນຢ່າງສິ້ນເຊີງນັ້ນ ຕ້ອງຫັນປ່ຽນເປັນຄົນຊາວເມືອງ.

--ຍົກສູງສະມັດຖະພາບດຶງດູດເອົາຜູ້ຫາວຽກເຮັດວຽກທຳທີ່ຕ່າງປະເພດໂຕເມືອງ.ລັດຖະບານກາງກຳລັງເພີ່ມທະວີໂຄງການສ້າງສາໂຕເມືອງເພື່ອເຮັດໃຫ້ໂຕເມືອງຢັ່ງຢາຍສົມເຫດສົມຜົນສະໝ່ຳສະເໝີກວ່າເກົ່າປະກົດຜົນເປັນຈິງ.ນອກຈາກນີ້ພາກສ່ວນກ່ຽວຂ້ອງກໍ່ກຳລັງຄົ້ນຄວ້າຈະຜ່ານການປະຕິຮູບລະບອບພາສີອາກອນປະການໃດເພື່ອປົກປ້ອງທີ່ດິນປູກຝັງ,ເຮັດໃຫ້ການພັດທະນາໂຕເມືອງຫລຸດພົ້ນຈາກການເອື່ອຍອີງຮູບແບບຂະຫຍາຍສ່ວນດ້ວຍທຶນສົມທົບທີ່ດິນ.

# ສ.ປຈີນຈະລົງເລິກຊຸກຍູ້ແຜນປະຕິບັດອາຫານປອດສານພິດ

## 中国将深入推进无公害食品行动计划

中国国家食品药品、监督管理局将加强初级农产品源头污染治理，深入推进农业标准化工作和无公害农产品认证工作，并将农村食品安全作为整治工作的重中之重。

ກົມກວດກາດູແລແລະຄຸ້ມຄອງອາຫານ--ຢຸກຢາແຫ່ງຊາດຂອງຈີນຈະເພີ່ມທະວີການບຳບັດແຫຼ່ງມົນລະພິດຜົນຜະລິດກະສິກຳຂັ້ນຕົ້ນ, ລົງເລິກຊຸກຍູ້ວຽກງານເຮັດໃຫ້ກະສິກຳເປັນແບບມາດຖານແລະວຽກງານພິສູດຜົນຜະລິດກະສິກຳປອດສານພິດ, ແລະເອົາອາຫານປອດໄພໃນຊົນນະບົດເປັນຈຸດສຸມບຳບັດທີ່ສຳຄັນ ໆ.

ເຈົ້າໜ້າທີ່ຮັບຜິດຊອບໃນກົມກວດກາດູແລແລະຄຸ້ມຄອງອາຫານ--ຢຸກຢາແຫ່ງຊາດຂອງຈີນໄດ້ສະແດງທັດສະນະວ່າ: ຈະຕ້ອງລົງເລິກທຳການບຳບັດຕໍ່ສະພາບແວດລ້ອມການຜະລິດ, ວັດຖຸທີ່ນຳມາຜະລິດແລະໄລຍະການຜະລິດ, ເພີ່ມທ່າແຮງຕິດຕາມຄຸ້ມຄອງຄຸນະພາບຜະລິດພັນທົ່ນຂອງກະສິກຳ, ຂະຫຍາຍຄວາມໄວ້ວາງໃຈຕໍ່ຈຸດທົດລອງຂອງທົ່ນກະສິກຳລົງສູ່ຊົນນະ



ບົດ,ປະກາດຄວາມເຫັນຊີ້ນຳໄວ້ວາງໃຈຕໍ່ທຶນຂອງກະສິກຳລົງສູ່ຊົນນະບົດ,ຊຸກຍູ້ການສ້າງສັນລະບົບສິນເຊື່ອທຶນກະສິກຳ,ເສີມທ່າແຮງການຊີ້ນຳບໍລິການ,ຍົກສູງລະດັບການເລືອກຊື້ແບບວິທະຍາສາດຂອງຊາວກະສິກອນແລະການນຳໃຊ້ທຶນຂອງກະສິກຳ.

ປີນີ້ສປຈີນຈະຄັດເລືອກເອົາ 14 ແຂວງແລະນະຄອນຂຶ້ນກົງກັບສູນກາງເປີດການເຄື່ອນໄຫວ(GAP)ທີ່ເປັນມາດຖານອັນດີທາງກະສິກຳແລະພິສູດການສ້າງຕັ້ງຫົວໜ່ວຍສາທິດ,ສົ່ງເສີມການຜະລິດກະສິກຳເປັນແບບມາດຖານ,ຂະຫຍາຍຜະລິດພັນກະສິກຳສົ່ງອອກ,ເລີ່ມລົງມືສ້າງສັນເມືອງ(ຫຼືຟາມ)ສາທິດກະສິກຳທີ່ເປັນແບບມາດຖານລະດັບຊາດຊຸດທຳອິດ 100 ແຫ່ງ. ລົງເລິກຊຸກຍູ້ການພິສູດຜົນຜະລິດກະສິກຳທີ່ປອດສານພິດ,ອາຫານສີຂຽວແລະຜົນຜະລິດກະສິກຳອົງຄະທາດຕະຫຼອດຮອດການພິສູດວັດຖຸນຳເຂົ້າໃນກະສິກຳ,ຍາດແຍ່ງໃຫ້ການພິສູດຜົນຜະລິດກະສິກຳທີ່ປອດສານພິດ,ອາຫານສີຂຽວແລະຜົນຜະລິດ








ກະສິກຳອົງຄະທາດບັນລຸເຖິງ5000 ຊະນິດ.

ນອກຈາກນັ້ນ,ກົມກວດກາດູແລແລະຄຸ້ມຄອງອາຫານ--ຢຸກຢາແຫ່ງຊາດຈະປະກາດຄວາມຄິດເຫັນຊີ້ນຳກ່ຽວກັບການເພີ່ມທະວີວຽກງານອາຫານປອດໄພຊົນນະບົດຕື່ມອີກ,ພ້ອມກັນຊຸກດັນເພື່ອສ້າງຕາໜ່າງຈໍລະຈອນອາຫານປອດໄພ,ຕາໜ່າງໜ້າທີ່ຮັບຜິດຊອບຕິດຕາມຄຸ້ມຄອງແລະຕາໜ່າງກວດກາດູແລຈາກມະຫາຊົນ,ສ້າງຖັນແຖວຄຸ້ມຄອງອາຫານປອດໄພ ອາຊີບແລະເຄິ່ງອາຊີບໃນຊົນນະບົດ,ຈຸດເດັ່ນແມ່ນເຮັດວຽກງານປັບປຸງຕະຫຼາດຈຳໜ່າຍຂາຍສົ່ງອາຫານທຸກປະເພດທີ່ກະແຈກກະຈາຍຢູ່ຊົນນະບົດຢ່າງກວ້າງຂວາງ,ຕະຫຼາດນັດການຄ້າ,ພໍ່ຄ້າຊາວຂາຍເອກະຊົນ, ໂຮງງານຂະໜາດນ້ອຍ,ຮ້ານຄ້ານ້ອຍແລະຮ້ານອາຫານນ້ອຍ,ສະກັດກັ້ນອາຫານທີ່ປອມແປງເສື່ອມຄຸນະພາບຫລັ່ງໄຫຼສູ່ຊົນນະບົດຢ່າງມີປະສິດທິຜົນ.

# ສປຈີນຈະປັບປຸງລະບອບປະກັນສັງຄົມໃຫ້ສົມບູນຕື່ມອີກ

## 中国将进一步完善社会保障制度

为了实现构建社会主义和谐社会的目标，中国今后将采取一系列措施，进一步完善各项社会保障制度。





ເພື່ອບັນລຸເຖິງເປົ້າໝາຍກໍ່ສ້າງສັງຄົມສະໜິມກົມກຽວແຫ່ງສັງຄົມນິຍົມ,ຕໍ່ໄປພາຍໜ້າສປຈີນຈະໃຊ້ມາດຕາການຫຼາຍປະການ ປັບປຸງລະບອບປະກັນໄພສັງຄົມຕ່າງ ໆໃຫ້ສົມບູນຕື່ມອີກ.

ທ່ານຖຽນເສັນຜິງລັດຖະມົນຕີແຮງງານແລະປະກັນໄພສັງຄົມຈີນກ່າວໃນງານພັດທະນາເວທີປາຖະກະຖາຊັ້ນສູງຂອງຈີນວ່າ:ປະເທດຈີນຈະຂະຫຍາຍຈຸດທົດລອງບັນຊີເອກະຊົນທີ່ປະກັນເບັ້ຍບໍານານພື້ນຖານຢ່າງແທດຈິງ.ພ້ອມກັນນັ້ນ,ຄົ້ນຄວ້າວາງແຜນງານປະຕິຮູບລະບອບປະກັນເບັ້ຍບໍານານຂອງຫົວໜ່ວຍກິດຈະການ(ງົບປະມານ),ສືບຄົ້ນຫາວຫາວິທີປັບປຸງລະບົບຮັບປະກັນການປິ່ນປົວຮັກສາຕົວຂອງປະຊາກອນໃນໂຕເມືອງໃຫ້ສົມບູນ,ຕັ້ງໜ້າແກ້ໄຂບັນຫາປະກັນໄພສັງຄົມຂອງຄົນງານຊາວກະສິກອນຢ່າງໜັກແໜ້ນ,ຄົ້ນຄວ້າວາງນະໂຍບາຍປະກັນໄພສັງຄົມຕໍ່ຊາວກະສິກອນຜູ້ຖືກຫຼວງເກນເອົາທີ່ດິນໄປ,ສືບຄົ້ນຫາວຫາສ້າງຕັ້ງລະບອບປະກັນເບັ້ຍບໍານານສັງຄົມໃນຊົນນະບົດເທື່ອລະກ້າວ.

ສປຈີນຈະຂະຫຍາຍຂອບເຂດປົກຫຸ້ມທາງປະກັນໄພສັງຄົມຕື່ມອີກ,ໃຫ້ຜູ້ທີ່ໄດ້ມີການປະກັນໄພຍິ່ງຫຼາຍກວ່າເກົ່າເປັນເປົ້າໝາຍນໍາໜ້າໃນການຊຸກຍູ້ການພັດທະນາພາລະກິດປະກັນໄພສັງຄົມ.ເອົາບຸກຄະລາກອນດໍາລົງຊີບໃນອົງການເສດຖະກິດທີ່ເປັນກໍາມະສິດປະສົມຫລືເອກະຊົນແລະບຸກຄະລາກອນດໍາລົງຊີບບໍ່ຄົງທີ່ນັ້ນເປັນຈຸດສຸມ,ຂະຫຍາຍລະດັບຄວາມປົກຫຸ້ມທາງປະກັນໄພສັງຄົມກວ້າງອອກ,ເຮັດໃຫ້ປະຊາລາສະດອນຈີນນັບວັນນັບຫຼາຍໄດ້ມີຄວາມປະກັນໄພສັງຄົມ,ເຊີດຊູຄວາມຜາສຸກຂອງປະຊາຊົນ.ສປຈີນຍັງຈະເກັບເກນຄ່າປະກັນສັງຄົມຕາມກົດໝາຍ,ຕັ້ງໜ້າດັດປັບໂຄງປະກອບລາຍຈ່າຍການເງິນຂອງຄະນະປົກຄອງທຸກຂັ້ນ,ຕັ້ງລະບົບການເງິນສ່ວນລວມ,ສ້າງກອງທຶນປະກັນໄພສັງຄົມໃຫ້ເຕີບໂຕແລະເຂັ້ມແຂງພ້ອມທັງກາຍເປັນລະບົບສາຍໃຍປະກັນໄພສັງຄົມຫລາຍຊັ້ນ.

ສປຈີນຈະຍຶດໝັ້ນການຖືຄົນເປັນກົກ,ເພີ່ມທະວີການສ້າງສັນສະມັດຖະພາບຂອງອົງກອນບໍລິການຄຸ້ມຄອງປະກັນໄພສັງຄົມ,ຍົກສູງປະສິດທິພາບຂອງວຽກງານແລະລະດັບບໍລິການ,ເລັ່ງລັດບາດກ້າວການສ້າງສາໂຄງການລະບົບຂໍ້ມູນຂ່າວສານປະກັນໄພແຮງງານ,ເພື່ອເຮັດໃຫ້ເຄືອຂ່າຍເຊື່ອມໂຍງທົ່ວປະເທດທາງປະກັນໄພສັງຄົມປະກົດຜົນເປັນຈິງໂດຍໄວເທົ່າທີ່ຈະໄວໄດ້,ຍົກລະດັບເຄື່ອງມືຄຸ້ມຄອງໃຫ້ສູງຂື້ນ.

ສປຈີນຍັງຈະເພີ່ມທະວີພື້ນຖານລະບຽບກົດໝາຍທີ່ປະກັນໄພສັງຄົມໃຫ້ເຂັ້ມແຂງ. 《ກົດໝາຍປະກັນໄພສັງຄົມ》ກໍ່ໄດ້ບັນຈຸເຂົ້າໃນໂຄງການນິຕິບັນຍັດໄປແລ້ວ,ຈະຍາດແຍ່ງໃຫ້ເຮັດສໍາເລັດໃນໄວ ໆນີ້.ພ້ອມກັນນີ້ຍັງຈະຕ້ອງກວດກາຄວບຄຸມຕາມກົດໝາຍຢ່າງເຂັ້ມງວດ,ເພີ່ມທະວີການໂຄສະນາລະບອບປະກັນໄພສັງຄົມ,ຍົກສູງລະດັບບໍລິຫານບ້ານເມືອງຕາມກົດໝາຍຂອງຄະນະປົກຄອງທຸກຂັ້ນ,ຍົກສູງຄວາມຕື່ນຕົວເສຍຄ່າປະກັນໄພຂອງຜູ້ເຂົ້າຮ່ວມສໍາລັບພະແນກກົມກອງທີ່ໃຊ້ຄົນແລະຍົກສູງສະຕິປົກປ້ອງສິດທິຕາມກົດໝາຍຂອງຊາວຜູ້ອອກແຮງງານ.



# ປະເທດຈີນຈະອອກແຮງສ້າງສັນລັດຖະບານບໍລິການຮັບຜິດຊອບ



## 中国将着力建设责任、服务政府

中国国家发展和改革委员会官员表示，中国将加快政府行政管理体制改革，同时完善推动科学发展的经济调节机制。“十一五”期间，中国的经济体制改革将以转变政府职能和深化企业、财税、金融等改革为重点，着力建设责任政府、服务政府和法治政府。

ເຈົ້າໜ້າທີ່ລັດຖະກອນຄະນະກຳມະການພັດທະນາແລະປະຕິຮູບແຫ່ງຊາດຈີນສະແດງທັດສະນະວ່າ:ປະເທດຈີນຈະເລັ່ງລັດປະຕິຮູບລະບົບຄຸ້ມຄອງບໍລິຫານຂອງລັດຖະບານ,ພ້ອມກັນນັ້ນບຳເພັນຊຸກຍູ້ກົນໄກດັດສົມເສດຖະກິດທີ່ພັດທະນາດ້ວຍວິທະຍາສາດ.ໃນໄລຍະ"ແຜນການ 5 ປີຄັ້ງທີ 11",ການປະຕິຮູບລະບົບເສດຖະກິດຂອງຈີນຈະເອົາການຫັນປ່ຽນພາລະບົດບາດຂອງລັດຖະບານແລະລົງເລິກປະຕິຮູບວິສາຫະກິດ,ພາສີອາກອນການຄັງແລະການເງິນເປັນຈຸດສຸມ,ອອກແຮງສ້າງສັນລັດຖະບານຮັບຜິດຊອບ,ລັດຖະບານບໍລິການແລະລັດຖະບານປົກຄອງຕາມກົດໝາຍ.

ທ່ານຝານເຮີງຊານຫົວໜ້າກົມປະຕິຮູບລະບົບເສດຖະກິດສັງລວມຂອງຄະນະກຳມະການພັດທະນາແລະປະຕິຮູບແຫ່ງຊາດຈີນໄດ້ກ່າວເນັ້ນໃນກອງປະຊຸມວຽກງານປະຕິຮູບລະບົບເສດຖະກິດທົ່ວປະເທດປີ 2006 ນີ້ວ່າ:"ອຳນາດທີ່ມີປະຈຳຂອງກະໂຕລັດຖະບານ ກໍ່ຄືຖານະບົດບາດພິເສດຊຶ່ງເປັນຜູ້ຄຸ້ມຄອງເສດຖະກິດ--ສັງຄົມໄດ້ມີບົດບາດພິເສດຂອງລັດຖະບານເພື່ອຕັດສິນຊີ້ຂາດການພັດທະນາແລະການປະຕິຮູບ.ດັ່ງນັ້ນ ຕ້ອງເອົາການກະຕຸກຊຸກຍູ້ການປະຕິຮູບລະບົບຄຸ້ມຄອງບໍລິຫານຂອງລັດຖະບານເປັນຂອດສຳຄັນເພື່ອຊຸກຍູ້ການປະຕິຮູບຮອບດ້ານ."

ແກ່ນສານຂອງການປະຕິຮູບລະບົບຄຸ້ມຄອງບໍລິຫານຂອງລັດຖະບານແມ່ນຫັນປ່ຽນພາລະບົດບາດຂອງລັດຖະບານ,ເຮັດໃຫ້ລັດຖະບານກາຍເປັນຜູ້ດຳເນີນງານດັດປັບເສດຖະກິດ,ກວດກາຄຸ້ມຄອງຕະຫຼາດ,ຄຸ້ມຄອງສັງຄົມແລະບໍລິການສາທາລະນະ,ເປັນລັດຖະບານຮັບຜິດຊອບທີ່ປະຕິບັດພາລະໜ້າທີ່ກ່ຽວຂ້ອງ

ຢ່າງສຸດຂີດ; ກາຍເປັນລັດຖະບານບໍລິການທີ່ອອກແຮງແກ້ໄຂຂໍ້ຫຍຸ້ງຍາກລຳຄານຂອງເຈົ້າກຳຕະຫຼາດແລະສ້າງສະພາບແວດລ້ອມອັນຈົບງາມ; ກາຍເປັນລັດຖະບານລະບອບກົດໝາຍທີ່ບໍລິຫານບ້ານເມືອງຕາມກົດໝາຍຢ່າງຮອບດ້ານແລະຮັບການກວດກາດູແລຈາກກົດໝາຍຢ່າງເຂັ້ມງວດ.

ຈຸດສຸມຂອງການປະຕິຮູບແມ່ນຕີຂອບເຂດກິດຈະການຂອງລັດຖະບານໃຫ້ຫຍໍ້ຕື່ມອີກ, ເອົາກິດຈະການທີ່ບໍ່ເໝາະສົມກັບລັກສະນະ




ແລະພາລະບົດບາດຂອງລັດຖະບານນັ້ນລ້ວນແຕ່ມອບໃຫ້ຫົວໜ່ວຍທຸລະກິດຫລືກິດຈະການຫລືອົງການຈັດຕັ້ງສື່ລະຫວ່າງກາງຂອງຕະຫຼາດ; ປັບປຸງວິທີຄຸ້ມຄອງບໍລິຫານໃຫ້ສົມບູນຕື່ມອີກ, ສືບຕໍ່ຕີຂອບເຂດກວດອະນຸມັດຂອງຝ່າຍບໍລິຫານໃຫ້ຫຍໍ້ເຂົ້າ; ລົງເລິກປະຕິຮູບອົງການລັດຖະບານຕື່ມອີກ, ເພີ່ມທະວີແລະປັບປຸງອົງການທີ່ດຳເນີນງານດັດສົມເສດຖະກິດແລະຄຸ້ມຄອງສັງຄົມໃຫ້ສົມບູນ, ຍົກເລີກອົງການພາກສ່ວນທີ່ດຳເນີນງານຫລືແຊກແຊງການເຄື່ອນໄຫວເສດຖະກິດຈຸລະພາກແລະກິດຈະການສັງຄົມໂດຍກົງນັ້ນເສຍ; ປັບປຸງລະບອບລັດຖະກອນໂດຍສະເພາະແມ່ນການຄັດເລືອກແຕ່ງຕັ້ງພະນັກງານຊີ້ນຳແລະສັງເກດຕີລາຄາຜົນງານປະຈຳການໃຫ້ສົມບູນຕື່ມອີກ; ປັບປຸງກົນໄກຍຸດໂທບາຍຕັດສິນດ້ວຍປະຊາທິປະໄຕຕາມວິທະຍາສາດໃຫ້ສົມບູນຕື່ມອີກ; ບູລະນະລະບົບສາຍໃຍກົດໝາຍຄຸ້ມຄອງຂອງລັດຖະບານໃຫ້ຄົບຖ້ວນຕື່ມອີກ.





## 联合国呼吁更有效管理水资源

联合国在日前发表的一份《世界水资源开发报告》中指出，世界的水资源不会用尽，目前水危机的主要原因与管理不善有关，更有效地管理水资源是化解这一危机的重要途径。

# ສະຫະປະຊາຊາດຮຽກຮ້ອງໃຫ້ຄຸ້ມຄອງຊັບພະຍາກອນນ້ຳມີປະສິດທິພາບກວ່າເກົ່າ

《ບົດລາຍງານການພັດທະນາຊັບພະຍາກອນນ້ຳຂອງໂລກ》ທີ່ຫາກໍ່ປະກາດໃໝ່ ໆ ຂອງສະຫະປະຊາຊາດ,ຫົວຂໍ້ຄື:"ນ້ຳ,ໜ້າທີ່ຮັບຜິດຊອບລວມຂອງພວກເຮົາ",ບົດລາຍງານດັ່ງກ່າວໄດ້ວິເຄາະສັງເກດຕີລາຄາຢ່າງຮອບດ້ານສຳລັບຊັບພະຍາກອນນ້ຳຈືດທົ່ວໂລກໃນປະຈຸບັນ.ໃນ 《ບົດລາຍງານການພັດທະນາຊັບພະຍາກອນນ້ຳຂອງໂລກ》 ຊີ້ອອກວ່າ:ໃນສະຕະວັດທີ 20, ປະລິມານຊົມໃຊ້ນ້ຳໃນທົ່ວໂລກໄດ້ເພີ່ມຂຶ້ນ 6 ເທົ່າຕົວ,ຄວາມໄວເພີ່ມຂຶ້ນທໍ່ກັບອັດຕາໄວທີ່ເພີ່ມປະຊາກອນສອງເທົ່າຕົວ.ເນື່ອງຈາກວ່າການຄຸ້ມຄອງບໍ່ຮອບຄອບສົມບູນ,ຊັບພະຍາກອນຂາດແຄນ,ສະພາບແວດລ້ອມມີການປ່ຽນແປງແລະການລົງທຶນພື້ນຖານໂຄງລ່າງບໍ່ກຸ້ມ,ໃນທົ່ວໂລກມີຄົນປະມານ 1ສ່ວນ 5ບໍ່ໄດ້ຮັບນ້ຳດື່ມທີ່ປອດໄພ,ມີຄົນ 40% ຂາດເຄື່ອງສຸຂະພັນພື້ນຖານ.ພ້ອມກັນນັ້ນ,ນ້ຳມົນລະພິດກໍ່ຊຶມເຊື້ອເຂົ້າຊັບພະຍາກອນນ້ຳຊົມໃຊ້ຢ່າງຫຼວງຫຼາຍພາຍມາກຕື່ມອີກ,ແລະເປັນໄພແກ່ສຸຂະພາບຂອງມວນມະນຸດ.ແຕ່ລະປີມີ 3.10 ລ້ານຄົນຕາຍຍ້ອນພະຍາດມີສ່ວນກ່ຽວດື່ມນ້ຳບໍ່ສະອາດ,ໃນນັ້ນເກືອບ 90% ແມ່ນເດັກນ້ອຍທີ່ບໍ່ເຖິງໄວ 5 ຂວບ.ກໍ່ໃນນັ້ນແທນທີ່ຈະກອບກູ້ຊີວິດ1.70 ລ້ານຄົນ ຖ້າສະໜອງນ້ຳດື່ມທີ່ປອດໄພໃຫ້ແລະປັບປຸງເຄື່ອງສຸຂະພັນໃຫ້ດີຂຶ້ນ.ຊັບພະຍາກອນນ້ຳບໍ່ທ່ອນຈະຊົມໃຊ້ໝົດສິ້ນ,ສາເຫດຕົ້ນຕໍຂອງວິກິດນ້ຳໃນປະຈຸບັນມັນພົວພັນກັບການຄຸ້ມຄອງບໍ່ສົມບູນ,ສະນັ້ນ ການຄຸ້ມຄອງຊັບພະຍາກອນນ້ຳຢ່າງມີປະສິດທິພາບໃຫ້ດີກວ່າເກົ່າແມ່ນຊ່ອງທາງສຳຄັນທີ່ແກ້ໄຂວິກິດການດັ່ງກ່າວ.





ບົດລາຍງານເຫັນວ່າ ແຫຼ່ງນ້ຳຈືດກວມລວມໃນໜ່ວຍໂລກມີຢູ່ຢ່າງພຽງພໍ,ແຕ່ຍ້ອນຂາດການຄຸ້ມຄອງຢ່າງມີປະສິດທິພາບ,ຂາດເງິນທຶນຮອນແລະພູມອາກາດສະພາບແວດລ້ອມມີການປ່ຽນແປງ,ມີຫຼາຍທ້ອງຖິ່ນໃນໂລກມີປະກົດການຂາດແຄນຊັບພະຍາກອນນ້ຳ.ປະຈຸບັນ ທົ່ວໂລກປະມານ 1.1 ຕື້ຄົນບໍ່ໄດ້ຮັບນ້ຳດື່ມທີ່ສະອາດ,2.6 ຕື້ຄົນຍັງບໍ່ໄດ້ຊົມໃຊ້ເຄື່ອງສຸຂະພັນພື້ນຖານ.ຖ້າວ່າມີນ້ຳດື່ມສະອາດແລະເຄື່ອງສຸຂະພັນທີ່ເໝາະສົມ,ແຕ່ລະປີໃນໂລກກໍ່ຈະສາມາດກອບກູ້ຊີວິດອິນຊີ1.60ລ້ານຄົນ.

ບົດລາຍງານໄດ້ກ່າວເນັ້ນວ່າ:ການຊົມໃຊ້ນ້ຳແມ່ນສິດຂອງທຸກ ໆ ຄົນ,ແລະກໍ່ແມ່ນເງື່ອນໄຂຈຳເປັນຂອງການພັດທະນາເສດຖະກິດ--ສັງຄົມ.ປະຊາຄົມໂລກແລະລັດຖະບານຂອງບັນດາປະເທດຕ້ອງສ້າງກົນໄກປອດໄພຕ່າງ ໆ,ປ້ອງກັນຄື່ນທະເລຊູນາມິ ໄພນ້ຳຖ້ວມ ໄພແຫ້ງແລ້ງແລະໄພທຳມະຊາດທີ່ເກີດຈາກນ້ຳ.



# ການຈັດກອງປະຊຸມໂຕະມົນກ່ຽວກັບການສຶກສາແລະການຝຶກອົບຮົມ-- ເປົ້າໝາຍການພັດທະນາສະຫັດສະວັດຂອງອົງການສະຫະປະຊາຊາດ

## 联合国千年发展目标——教育与培训圆桌会议举行

为探讨适应联合国千年发展目标的新的教学培训方式，推动千年发展目标的实施，联合国千年发展目标——教育与培训第四次圆桌会议在北京举行。

ເພື່ອສຳມະນາຄົ້ນຄວ້າຫາຮູບການສຶກສາແລະຝຶກອົບຮົມໃໝ່ໃຫ້ຍິ່ງສອດຄ່ອງກັບເປົ້າໝາຍການພັດທະນາສະຫັດສະວັດຂອງອົງການສະຫະປະຊາຊາດ, ຊຸກຍູ້ການຈັດຕັ້ງປະຕິບັດເປົ້າໝາຍ



ການພັດທະນາສະຫັດສະວັດ, ກອງປະຊຸມໂຕະມົນການສຶກສາແລະການຝຶກອົບຮົມຄັ້ງທີ 4 --ເປົ້າໝາຍການພັດທະນາສະຫັດສະວັດຂອງອົງການສະຫະປະຊາຊາດໄດ້ຈັດຂຶ້ນທີ່ປັກກິ່ງ.

ເປົ້າໝາຍການພັດທະນາສະຫັດສະວັດຂອງອົງການສະຫະປະຊາຊາດແມ່ນໄດ້ສັງຮອມຄວາມມຸ່ງມາດປາຖະໜາທີ່ມີຕໍ່ຊີວິດການເປັນຢູ່ອັນສົດໃສຂອງສັງຄົມມະນຸດ, ໄດ້ສະແດງເຖິງສັດທາຮ່ວມກັນເພື່ອຊຸກດັນສັນຕິພາບ, ຄວາມສະຖຽນລະພາບແລະວັດທະນາຖາວອນຂອງໂລກ, ເຮັດໃຫ້ຕ່າງຝ່າຍຕ່າງມີຜົນປະໂຫຍດຮ່ວມກັນປະກົດເປັນຈິງ. ທ່ານຫວັງຈົງຢີ ຮອງປະທານສະພາປຶກສາການເມືອງແຫ່ງປະເທດຈີນ, ປະທານຄະນະມົນຕີເສດຖະກິດສັງຄົມແຫ່ງປະເທດຈີນ, ປະທານຄະນະມົນຕີເສດຖະກິດສັງຄົມແລະສະມາຄົມຄ້າຍຄືອົງການຈັດຕັ້ງສາກົນໄດ້ຊີ້ອອກວ່າ: ມີແຕ່ປະເທດທັງໝົດຢູ່ໃນໂລກນີ້ສາມັກຄີກັນເຂົ້າຢ່າງແໜ້ນແຟ້ນ, ພ້ອມກັນກຳແໜ້ນກາລະໂອກາດ, ຮັບມືກັບສິ່ງທ້າທາຍ, ຈຶ່ງຈະສາມາດສ້າງອະນາຄົດອັນຮຸ່ງເຮືອງເຫລືອງເຫລື້ອມເພື່ອການພັດທະນາສັງຄົມມະນຸດແລະຈຶ່ງຈະສາມາດສ້າງສັງຄົມທີ່ມີ

ຄວາມປອງດອງພັດທະນາຢ່າງຍືນຍົງແລະວັດທະນາຖາວອນພ້ອມກັນຢ່າງແທ້ຈິງ. ທ່ານໄດ້ລິເລີ່ມສະເໜີໃຫ້ບັນດາປະເທດໃຊ້ມາດຕາການທີ່ມີຜົນສັກສິດເພື່ອຕັ້ງໜ້າລົງມືດຳເນີນງານ, ເພີ່ມທະວີຊຸກຍູ້ໃຫ້ອົງການສະຫະປະຊາຊາດມີບົດບາດເປັນແກ່ນສານທ່າມກາງການຮ່ວມມືພັດທະນາສາກົນ, ເສີມຂະຫຍາຍບົດບາດການຊັກຊວນນຳພາແລະປະສານກົມກຽວໃນຂົງເຂດການພັດທະນາຂອງຄະນະມົນຕີເສດຖະກິດສັງຄົມຂອງອົງການສະຫະປະຊາຊາດ, ສ້າງກອບປະເມີນການຄືບໜ້າຕໍ່ເປົ້າໝາຍການພັດທະນາສະຫັດສະວັດທີ່ຍຸດຕິທຳ, ສົມເຫດສົມຜົນແລະມີປະສິດທິພາບ, ຄະນະມົນຕີເສດຖະກິດສັງຄົມຂອງບັນດາປະເທດ, ອົງການບໍ່ຂຶ້ນກັບລັດຖະບານແລະວົງການການສຶກສາຈະຕ້ອງເພີ່ມທະວີການປະສານກົມກຽວແລະການຮ່ວມມື, ເຮັດໃຫ້ການຊຸດເຊີຍຊຶ່ງກັນແລະກັນມີທ່າແຮງປະກົດຜົນເປັນຈິງ.

ເປົ້າໝາຍການພັດທະນາສະຫັດສະວັດຂອງອົງການສະຫະປະຊາຊາດແມ່ນໝາຍເຖິງເປົ້າໝາຍການພັດທະນາ 8 ໂຄງການໃນ "ຖະແຫຼງການສະຫັດສະວັດຂອງອົງການສະຫະປະຊາຊາດ" ທີ່ໄດ້ຜ່ານກອງປະຊຸມປະມຸກສະຫັດສະວັດອົງການສະຫະປະຊາຊາດເດືອນ 9 ປີ 2000 ຮັບຮອງແລະລະບຸໄວ້ວ່າ: "ຮອດປີ 2015 ຈະເຮັດໃຫ້ປະຊາກອນທີ່ຍາກຈົນຂັ້ນແຄ້ນທີ່ສຸດຂອງໂລກຫລຸດລົງເຄິ່ງໜຶ່ງ, ເຜີຍແຜ່ການສຶກສາຂັ້ນປະຖົມໃຫ້ທົ່ວເຖິງ" ເປັນຕົ້ນ.

ກອງປະຊຸມຄັ້ງນີ້ລິເລີ່ມຂຶ້ນໂດຍຄະນະມົນຕີເສດຖະກິດສັງຄົມແລະສະມາຄົມຄ້າຍຄືອົງການຈັດຕັ້ງສາກົນຂອງອົງການສະຫະປະຊາຊາດຊຶ່ງຢູ່ພາຍໃຕ້ການເປັນເຈົ້າພາບຂອງຄະນະມົນຕີເສດຖະກິດສັງຄົມແຫ່ງປະເທດຈີນ, ພະແນກການຈັດຕັ້ງທີ່ບໍ່ຂຶ້ນກັບລັດຖະບານຂອງຄະນະມົນຕີເສດຖະກິດສັງຄົມອົງການສະຫະປະຊາຊາດ, ສະມາຄົມສົ່ງເສີມການແລກປ່ຽນສາກົນຂອງອົງການພົນລະເຮືອນປະເທດຈີນແລະມະຫາວິທະຍາໄລປັກກິ່ງຮ່ວມກັນຈັດຂຶ້ນ. ເຈົ້າໜ້າທີ່, ນັກຊ່ຽວຊານ, ນັກປາດແລະຜູ້ຊົງຄຸນວຸດທິໃນວົງການການສຶກສາແລະວົງການທຸລະກິດຂອງພະແນກກົມກອງເຈົ້າພາບຈັດທຳ, ອົງກອນຄົ້ນຄວ້າທີ່ລືຊື່ພາຍໃນປະເທດຈີນ, ອົງການຈັດຕັ້ງສາກົນແລະອົງການທີ່ບໍ່ຂຶ້ນກັບລັດຖະບານທີ່ມີສ່ວນກ່ຽວຂ້ອງ 100 ກວ່າທ່ານໄດ້ເຂົ້າຮ່ວມກອງປະຊຸມດັ່ງກ່າວຢ່າງພ້ອມພຽງ.



ຜູ້ແປພາສາ: ທອງຂຽນ ຂຳຕະກຸນ



# ລັດຖະມົນຕີຕ່າງປະເທດຂອງລາວກ່າວ ເນັ້ນເພີ່ມທະວີສາຍພົວພັນຮ່ວມມືກັບຈີນ

## 老挝外长强调加强与中国的合作关系

老挝副总理兼外长宋萨瓦・伦萨瓦在万象说，老挝今后将进一步加强同中国的友好合作关系。当前老挝与中国的友好合作关系正朝着全面、富有成效的方向发展，并取得了积极的成果。宋萨瓦表示相信，老挝同中国的友好合作关系今后将进一步得到加强和全面发展。

ທ່ານສົມສະຫວາດ ເລັ່ງສະຫວັດ ຮອງນາຍົກລັດຖະມົນຕີ ລັດຖະມົນຕີວ່າການກະຊວງການຕ່າງປະເທດລາວໄດ້ກ່າວຢູ່ວຽງຈັນວ່າ:ຕໍ່ໄປພາຍໜ້າລາວຈະເພີ່ມທະວີສາຍພົວພັນຮ່ວມມືມິດຕະພາບກັບຈີນຕື່ມອີກ.

ໃນກອງປະຊຸມຜູ້ແທນຄັ້ງທີ 8 ຂອງພັກປະຊາຊົນປະຕິວັດລາວຊຶ່ງຫາກໍ່ອັດລົງໄວ ໆນີ້ນັ້ນ ທ່ານສົມສະຫວາດໄດ້ຖືກເລືອກຕັ້ງເປັນກຳມະການກົມການເມືອງສູນກາງພັກປະຊາຊົນປະຕິວັດລາວ.ໃນງານປະຊຸມຖະແຫຼງຂ່າວໃນມື້ດຽວກັນນັ້ນ ທ່ານໄດ້ຕອບການສຳພາດຂອງນັກຂ່າວສຳນັກຂ່າວສານຊິນຮວາວ່າ:ພັກປະຊາຊົນປະຕິວັດລາວກັບພັກກອມມູນິດຈີນມີສາຍພົວພັນຮ່ວມມືມິດຕະພາບອັນດີທີ່ສຸດ,ຊຸມປີມໍ່ ໆມານີ້,ການຢ້ຽມຢາມຊຶ່ງກັນແລະກັນລະຫວ່າງຜູ້ນຳຊັ້ນສູງສອງຝ່າຍໄດ້ເພີ່ມທະວີຄວາມໄວ້ເນື້ອເຊື່ອໃຈກັນຂອງສອງພັກ,ສອງລັດແລະຂອງປະຊາຊົນສອງຊາດລາວ--ຈີນໃຫ້ໜັກແໜ້ນຕື່ມອີກ.

ທ່ານສົມສະຫວາດໄດ້ກ່າວວ່າ:ການພົວພັນຮ່ວມມືມິດຕະພາບລະຫວ່າງລາວ--ຈີນໃນສະເພາະໜ້ານີ້ພວມພັດທະນາໄປທາງທີ່ດຮອບດ້ານ,ມີປະສິດທິຜົນຢ່າງເຕັມປ່ຽມ,ໄດ້ປະສົບຜົນສຳເລັດທາງບວກ.ທ່ານໄດ້ສະແດງຄວາມເຊື່ອແນ່ວ່າ:ສາຍພົວພັນຮ່ວມມືມິດຕະພາບລະຫວ່າງລາວ--ຈີນຕໍ່ໄປພາຍໜ້າຈະໄດ້ຮັບການເພີ່ມທະວີຮັດແໜ້ນແລະພັດທະນາຢ່າງຮອບດ້ານຕື່ມອີກ.

ຜູ້ແປພາສາ: ທອງຂຽນ ອຳຕະກຸນ



## 朱马利当选
## 老挝人民革命党总书记

老挝人民革命党第八次代表大会在万象闭幕，原老挝人民革命党政治局委员朱马利·赛雅贡当选老挝人民革命党中央委员会总书记（前称主席）。

# ທ່ານຈູມມະລີ ໄຊຍະສອນໄດ້ຖືກເລືອກຕັ້ງ ເປັນເລຂາທິການໃຫຍ່ພັກປະຊາຊົນປະຕິວັດລາວ

ກອງປະຊຸມໃຫຍ່ຜູ້ແທນຄັ້ງທີ 8 ຂອງພັກປະຊາຊົນປະຕິວັດລາວໄດ້ອັດລົງໃນວັນທີ 21 ມີນາທີ່ນະຄອນຫຼວງວຽງຈັນ,ທ່ານຈູມມະລີ ໄຊຍະສອນ ຄະນະກຳມະການກົມການເມືອງສູນກາງພັກປະຊາຊົນປະຕິວັດລາວສະໄໝທີ 7 ໄດ້ຖືກເລືອກຕັ້ງເປັນເລຂາທິການໃຫຍ່(ຊຶ່ງແຕ່ກ່ອນຮຽກວ່າປະທານ)ຄະນະກຳມະການບໍລິຫານງານສູນກາງພັກປະຊາຊົນປະຕິວັດລາວ.

ກອງປະຊຸມໃຫຍ່ຄັ້ງນີ້ໄດ້ຮັບເອົາການຮ້ອງຂໍລາອອກຈາກຕຳແໜ່ງປະທານພັກ ຍ້ອນໄວອາຍຸແກ່ແລ້ວຂອງປະທານຄຳໄຕ ສີພັນດອນ ອະດີດປະທານຄະນະກຳມະການບໍລິຫານງານສູນກາງພັກປະຊາຊົນປະຕິວັດລາວຢ່າງເປັນເອກະສັນ.ກອງປະຊຸມໃຫຍ່ຄັ້ງນີ້ຍັງໄດ້ເລືອກຕັ້ງເອົາຄະນະກຳມະການກົມການເມືອງສູນກາງພັກ 11ທ່ານແລະຄະນະກຳມະການສູນກາງພັກ 55 ທ່ານ,ພ້ອມທັງໄດ້ເປັນເອກະສັນຜ່ານມະຕິກອງປະຊຸມໃຫຍ່ຜູ້ແທນຄັ້ງທີ 8 ຂອງພັກປະຊາຊົນປະຕິວັດລາວ.

ທ່ານຈູມມະລີ ໄຊຍະສອນໄດ້ກ່າວຄຳປາໄສໃນພິທີອັດກອງປະຊຸມ,ທ່ານໄດ້ສະແດງວ່າ ຈະສືບຕໍ່ປະຕິບັດທິດທາງນະໂຍບາຍທີ່ໄດ້ກຳນົດໄວ້ຂອງພັກປະຊາຊົນປະຕິວັດລາວ,ດຳເນີນການປ່ຽນແປງໃໝ່ຢ່າງເລິກເຊິ່ງ,ຕັ້ງໜ້າພະຍາຍາມເຮັດສຳເລັດແຜນການ 5 ປີຄັ້ງທີ 6 ທີ່ກອງປະຊຸມໃຫຍ່ຜູ້ແທນຄັ້ງທີ 8 ໄດ້ວາງໄວ້.ທ່ານກ່າວວ່າ:ພັກປະຊາຊົນປະຕິວັດລາວໃນຂັ້ນຕໍ່ໄປຈະສືບຕໍ່ຍຶດໝັ້ນແນວທາງປ່ຽນແປງໃໝ່,ຈະແກ້ໄຂບັນຫາຄວາມທຸກຍາກໃນຂັ້ນພື້ນຖານໃຫ້ໄດ້ໃນປີ 2010,ຈະພະຍາຍາມສູ້ຊົນເພື່ອເຮັດໃຫ້ປະເທດຊາດຫລຸດພົ້ນຈາກຖັນແຖວປະເທດດ້ອຍພັດທະນາທີ່ທຸກຍາກໃນໂລກໃນປີ 2020.

ທ່ານຈູມມະລີ ໄຊຍະສອນເຊື່ອໝັ້ນວ່າ,ພາຍໃຕ້ການນຳອັນຖືກຕ້ອງຂອງພັກປະຊາຊົນປະຕິວັດລາວ,ປະຊາຊົນລາວແນ່ນອນຈະສາມາດສ້າງປະເທດຂອງຕົນໃຫ້ເປັນປະເທດສັງຄົມນິຍົມທີ່ມີສັນຕິພາບ,ເອກະລາດແລະວັດທະນາຖາວອນ.

# ເມືອງລາວ:ເມືອງແຫ່ງພຸດທະສາສະໜາທີ່ມີສັນຕິສຸກອົບອຸ່ນ





## 老挝：温馨、祥和的佛国

在老挝游玩，除了游览那些未经人工雕琢过的原始自然风光，就是去参观那些金碧辉煌、独具特色的寺庙，而到老挝人家里做客，更能真正感受到佛教对于古老国度的影响有多大，老挝人对于心中的佛教信仰又是多么的执着和坚持！

ໄປທ່ຽວຫລິ້ນເມືອງລາວ ນອກຈາກທ່ຽວຊົມທິວທັດທຳມະຊາດປະຖົມປະຖານທີ່ຂາດແຮງງານມະນຸດໄປເຈຍລະໄນຕົບແຕ່ງນັ້ນແລ້ວ,ຍັງສາມາດໄປທ່ຽວຊົມວັດວາອາຮາມທີ່ຮຸ່ງເຮືອງເຫລືອງເຫລື້ອມແລະມີສີສັນເປັນເອກະລັກ.

ທ່າມກາງການທ່ຽວຊົມ,ແນມເຫັນເມືອງລາວເປັນປະເທດໜຶ່ງທີ່ມີຄວາມເຫລື້ອມໃສໃນການເຊື່ອຖືພຸດທະສາສະໜາ,ພາຍໃນປະເທດມີວັດວາອາຮາມຢ່າງຫລວງຫລາຍແລະພະສົງສາມະເນນກໍ່ຫລາຍ,ແຕ່ວ່າຢາກສຳຜັດນ້ຳໃສໃຈຈິງຂອງປະຊາຊົນລາວທີ່ຢູ່ໃຕ້ຮົ່ມໂພທິສົມພານຂອງພຸດທະລັດສະໝີຢ່າງແທ້ຈິງນັ້ນ,ຍັງຕ້ອງໄດ້ໄປເຮືອນຂອງຄົນລາວຫລືເຮັດຄືສິດເອື້ອຍຂອງຂ້າພະເຈົ້ານັ້ນໄປເປັນແມ່ຂາວຈຳສິນຢູ່ວັດຈັກມື້ກ່ອນເພື່ອໃຫ້ມີຄວາມສຳຜັດໂດຍຕົນເອງ.ເພື່ອນຮຽນລາວຂອງຂ້າພະເຈົ້າມີຄວາມກະຕືລືລົ້ນທີ່ສຸດຕໍ່ຂ້າພະເຈົ້າ,ມັກຊັກຊວນຂ້າພະເຈົ້າໄປເປັນແຂກຢູ່ເຮືອນຂອງເຂົາເຈົ້າ. ໂດຍທົ່ວໄປແລ້ວຄົນລາວມີຄວາມກະຕືລືລົ້ນແລະຊື່ສັດປອດໃສ,ມັກຊວນໝູ່ເພື່ອນຫລືຄົນລື້ງເຄີຍໄປສ້າຊຸມມ່ວນຊື່ນຢູ່ເຮືອນຂອງຕົນ ຄື: ປູສາດຜືນໃຫຍ່ຢູ່ກາງເຮືອນຫລືພາກັນໄປນັ່ງຢູ່ກ້ອງຮົ່ມໄມ້ຂອງເດີ່ນບ້ານພາກັນເວົ້ານົວຫົວມ່ວນ,ທັງກິນຂອງກິນທັງລົມກັນຢ່າງສະໜຸກສະໜານສຳລານໃຈ.

ມື້ໜຶ່ງຂອງທ້າຍສັບປະດາ,ເພື່ອນລາວຂອງຂ້າພະເຈົ້າຜູ້ນັ້ນ

ໄດ້ຊວນຂ້າພະເຈົ້າໄປທ່ຽວເຮືອນລາວ, ແລ້ວໄດ້ບອກໃຫ້ຮູ້ວ່າຈະພາຂ້າພະເຈົ້າໄປເບິ່ງພິທີຕັກບາດຢູ່ໃນວັດໃກ້ເຮືອນລາວແລະໄປເບິ່ງພາບທີ່ພະສົງສາມະເນນໄປບິນທະບາດໃນຕອນເຊົ້າ. ກ່ອນໜ້ານີ້ຂ້າພະເຈົ້າກໍ່ເຄີຍໄດ້ຍິນເລື່ອງພິທີຕັກບາດຢາດນ້ຳຂອງຄົນລາວມາກ່ອນແລ້ວ, ແຕ່ບໍ່ທັນເຄີຍເຫັນກັບຕາເທື່ອ.

ເຮືອນຂອງເພື່ອນຮຽນຂ້າພະເຈົ້າຢູ່ໃກ້ ໆ ທາດຫລວງຊຶ່ງເປັນປູຊະນີຍະສະຖານທີ່ສັກກາລະບູຊາລືຊື່ທາງພຸດທະສາສະໜາໃນນະຄອນຫລວງວຽງຈັນ. ກາງຄືນຂອງມື້ນັ້ນ, ຂ້າພະເຈົ້າກໍ່ໄດ້ພັກແຮມຢູ່ເຮືອນຂອງນາງ. ເອື້ອຍກົກແລະເອື້ອຍຖ້ອນ 2 ຂອງນາງກໍ່ເປັນຄົນມີນ້ຳໃຈກະຕືລືລົ້ນຮັກແຂກແພງຄົນທີ່ສຸດ, ເຂົາເຈົ້າເມື່ອຮູ້ວ່າຂ້າພະເຈົ້າຫາກໍ່ມາລາວບໍ່ດົນ ຍັງບໍ່ທັນມີສິ້ນນຸ່ງ, ກໍ່ພາກັນເອົາສິ້ນແລະຜ້າບ່ຽງຂອງເຂົາເຈົ້າອອກມາໃຫ້ຂ້າພະເຈົ້າເລືອກເອົາໄວ້ແຕ່ງກາຍ, ເພາະວ່າອີງຕາມປະເພນີຂອງລາວແລ້ວ, ຜູ້ຍິງຈະໄປເຂົ້າການເຂົ້າໂຮງຮຽນຫລືໄປວັດວາອາຮາມ ກໍ່ລ້ວນແຕ່ຕ້ອງນຸ່ງສິ້ນ. ສິ້ນແລະຜ້າບ່ຽງຂອງພວກເພິ່ນຈັ່ງແມ່ນງາມເອົາແທ້, ມີບາງຜືນແມ່ນເຮັດດ້ວຍຜ້າໄໝ, ກໍ່ມີຜ້າຝ້າຍສ່ວນໜຶ່ງ, ສີມືລະອຽດອ່ອນປະດິດປະດອຍ. ເມື່ອຂ້າພະເຈົ້ານຸ່ງສິ້ນດັ່ງກ່າວນີ້ແລ້ວ ອົດບໍ່ໄດ້ຕ້ອງອຸທານອອກມາ ໂອ! ພວກແມ່ຍິງລາວນີ້ຈັ່ງແມ່ນໃຈປ່ອງສີມືຄ່ອງແທ້ນໍ, ທັງໃຈດີແລະເກັ່ງກ້າສາມາດ. ສຸດທ້າຍ ຂ້າພະເຈົ້າໄດ້ເລືອກເອົາສິ້ນໄໝສີສົ້ວຫົວເປັດແລະຜ້າບ່ຽງໄໝ ສີສົ້ວລາຍດອກຂາວ. ກ່ອນຈະນອນພວກເຮົາໄດ້ເອົາທູບທຽນດອກໄມ້, ເຂົ້າໜົມປັງແລະເງິນກີບໃບໃໝ່ໆກຽມສຳລັບຕັກບາດມື້ອື່ນເຊົ້າໄວ້ໃນຂັນເງິນແລະຂັນເຄືອບຄຳ.





ນອນຫລັບຝັນດີຕະຫຼອດຄືນຈົນຮອດແຈ້ງ ຊ້ຳຍັງແມ່ນຕອນເຊົ້າແສງສຸລິສົ່ງແສງຄຳໄປທົ່ວທຸກອານາ, ເມື່ອໄດ້ນຸ່ງຖືເຄື່ອງອາພອນດັ້ງເດີມຂອງຄົນລາວແລ້ວ, ຂ້າພະເຈົ້າກໍ່ປຽບສະເໝືອນກັບນາງສາວລາວຜູ້ໜຶ່ງ ໂລດ, ຮູ້ສຶກວ່າຕົນເອງກໍ່ສົງນາງາມແທ້! ເມື່ອຖືຂັນເງິນຂັນຄຳທີ່ໃສ່ເຕັມສິ່ງຂອງເພື່ອຕັກບາດແລ້ວ, ພວກເຮົາກໍພາກັນຍ່າງໄປວັດແຫ່ງໜຶ່ງທີ່ຢູ່ບໍ່ໃກ້, ຕາມທາງກໍ່ເຫັນພວກຊາວພຸດທີ່ມີຄວາມເຫລື້ອມໃສທັງຍິງແລະຊາຍ ໃຜ ໆກໍ່ຖື



ຂັນໃສ່ຂອງທານຍ່າງໄປສູ່ວັດ, ຜູ້ຍິງຜູ້ໃດກໍ່ນຸ່ງສິ້ນທີ່ສວຍງາມ ມີຜ້າບ່ຽງບ່ຽງພ້ອມ, ຜູ້ຊາຍບໍ່ວ່າຈະນຸ່ງຜ້າສະໂລ່ງຫລືບໍ່ ກໍ່ລ້ວນ ແຕ່ໄດ້ບ່ຽງຜ້າບ່ຽງສີຂາວຫລືຜ້າບ່ຽງລາຍອື່ນ.

ພາຍໃຕ້ແສງອະລຸນຍາມເຊົ້າ, ວັດວາອາຣາມໄດ້ປະກົດພາບ ເຄິ່ງຂຶມແລະວາດເກົ່າແກ່ລຽບ ໆ, ພະພຸດທະຮູບທີ່ປະດິດສະຖານ ຢູ່ກຸຕິຄືວ່າພວມເປັ່ງລັດສະໝີແສງຄຳອອກຍິບຍັບສະດຸດຕາຄືນ, ພະພິກຂຸໃນວັດກໍ່ໄດ້ເລີ່ມທຳການເທສະໜາ, ຊາວສາສະນິກະຊົນ ທັງຫຼາຍທີ່ມີຄວາມເຫລື້ອມໃສກໍ່ພາກັນກາບໄຫວ້ຢູ່ຕໍ່ໜ້າພະເຖ ລະທັງຫຼາຍເພື່ອຮັບຟັງການເທສະໜາຂອງເພິ່ນ. ອ້າພະ ເຈົ້າປົດເກີບແລ້ວ ຄ່ອຍ ໆຍ່າງກົ້ມໝອບເຂົ້າໄປກຸຕິຊອກ ບ່ອນນັ່ງແລ້ວກາບໄຫວ້ຟັງພະເທສະໜາ. ປະມານເຄິ່ງຊົ່ວໂມງ ຫຼັງຈາກພະພິກຂຸເທສະໜາສິ້ນສຸດລົງ, ພິທີຕັກບາດກໍ່ເລີ່ມ ຕົ້ນ, ເຫັນແຕ່ໂຕະຍາວປະມານ 10 ແມັດປູດ້ວຍຜ້າຂາວແລະ ລຽນດ້ວຍບາດຫລາຍໜ່ວຍ, ພຸດທະສາສະນິກະຊົນທັງຫລາຍໄດ້ ທະຍອຍກັນເຂົ້າແຖວປະເຄນທູບທຽນ, ເຂົ້າໜຽວ, ໝາກ ໄມ້ສົດແລະເງິນກີບໃສ່ໃນບາດ, ເມື່ອຂອງທານເຫລົ່ານັ້ນໃສ່



ເຕັມບາດແລ້ວ ກໍ່ມີຜູ້ຄົນຊ່ວຍເອົາຂອງທານດັ່ງກ່າວຖອກໃສ່ຖົງຫລືກະຕ່າທີ່ກຽມໄວ້ແລ້ວ ມີພະສົງໄດ້ໄປຊ່ວຍນັ່ງມັດແລະນັບເງິນທີ່ຜູ້ຄົນເອົາມາທານໃຫ້ແຕ່ລະອົງຊຶ່ງເປັນເຈົ້າຂອງບາດ. ສະພາບທີ່ແປກ ໆແນວນີ້ ກໍ່ມີແຕ່ຢູ່ໃນປະເທດທີ່ມີຊາວພຸດທະບໍລິສັດທີ່ເຫຼື້ອມໃສສັດທາຕໍ່ສາສະໜາພຸດຢ່າງຫຼວງຫຼາຍເທົ່ານັ້ນເທາະຈຶ່ງຄ່ອຍໄດ້ເຫັນປະຈັກຕາ!

ມື້ຕໍ່ມາ, ເພື່ອນຮຽນຂອງຂ້າພະເຈົ້າຜູ້ນັ້ນໄດ້ພາຂ້າພະເຈົ້າ



ໄປຖະໜົນທົ່ງຂັນຄໍາ, ຢູ່ທີ່ນັ້ນພາບການຕັກບາດຂອງປະຊາຊົນຍິ່ງເຮັດໃຫ້ຂ້າພະເຈົ້າຕື່ນເຕັ້ນແລະໜ້າອັດສະຈັນ, ຢູ່ຕາມທາງຄົນທຽວສອງຟາກຂ້າງຖະໜົນ ມີຜູ້ຍິງຫລາຍຄົນປູສາດແລ້ວຄຸເຂົ່າເອົາທູບທຽນ ດອກໄມ້ ໝາກໄມ້ສົດແລະອາຫານຕ່າງ ໆໃສ່ໃນຂັນໃນພາແລະແອບເຂົ້າໜຽວເຕັມແອບແລ້ວຈຶ່ງຖວາຍແດ່ພະພິກຂຸທີ່ພວມເດີນແຖວມາບິນທະບາດ, ອິລິຍາຂອງເຂົາເຈົ້າທີ່ເອົາຂອງທານແລະດອກໄມ້ທູບທຽນໃສ່ບາດຂອງພະພິກຂຸສາມະເນນດ້ວຍຄວາມເຄົາລົບນັບຖືແລະຈິງໃຈເຕັມໄປດ້ວຍສັດທາເຫລື້ອມໃສແລະເປັນໄປຕາມທໍາມະຊາດ. ເມື່ອເຫັນພາບປະຈັກຕາດັ່ງກ່າວແລ້ວ, ຂ້າພະເຂົ້າຄິດເຫັນໃນທີ່ສຸດຂ້າພະເຈົ້າຈຶ່ງໄດ້ສໍານຶກຮູ້ສຶກຢ່າງແທ້ຈິງເຖິງພຸດທະສາສະໜາໄດ້ມີຜົນສະທ້ອນຢ່າງເລິກເຊິ່ງກຽງໄກຕໍ່ປະເທດລາວທີ່ບູຮານເກົ່າແກ່ດັ່ງກ່າວ, ໃນດວງໃຈຂອງຄົນລາວແມ່ນເຊື້ອຖືພຸດທະສາສະໜາດ້ວຍຄວາມສັດທາອັນເດັດດ່ຽວໜຽວແໜ້ນເຖິງຂັ້ນໃດ!





# ຊື່ນຊົມປົມຍອຍຈີນ

## 喜庆中国结

中国结是中国特有的民间手工编织装饰品，中国结经过几千年的结艺演变现已成为广大群众喜爱的精制华美的艺术品。

ປົມຍອຍຈີນເປັນເຄື່ອງປະດັບຫັດຖະກຳຖັກສານພື້ນເມືອງທີ່ມີເອກະລັກຂອງຈີນ, ປົມຍອຍຈີນຜ່ານສີນີຖັກສານມາຫຼາຍພັນປີດຽວນີ້ໄດ້ພັນປ່ຽນເປັນສິລະປະກຳ ປະດິດປະດອຍວິຈິດງາມຕາທີ່ມະຫາຊົນນິຍົມກັນຢ່າງກວ້າງຂວາງ.

ອັກສອນ "ປົມ "ໃນພາສາຈີນສະແດງເຖິງກ້ອນກຳລັງ, ຄວາມສາມັກຄີ, ຄວາມສະໜິມກົມກຽວ, ຊົມຊື່ນແລະສົ່ງພອນໄຊຊື່ງເຕັມໄປດ້ວຍຈິດໃຈອາລົມ, "ປົມ "ໃນພາສາຈີນຍັງມີສຽງຄ້າຍຄ້າຍກັບສຽງ "ສິລິມຸງຄຸນ "ທີ່ມີເນື້ອຫາສາລະອາດສະໜາ, ລາບຍຶດ, ອາຍຸວັນນະ, ຄວາມສົດຊື່ນ, ຊັບສິນແລະຄວາມສະຫວັດດີ

ພາບ.

ປົມຍອມຈີນບໍ່ພຽງແຕ່ມີສີມີຖັກສານໄປດ້ວຍສີສັນງາມເທົ່ານັ້ນ ຍັງມີຊື່ຮຽກໄປຕາມລັກສະນະຂອງມັນເຊັ່ນ: ປົມຍອຍຂອດຍາວ, ປົມຍອຍສຳລັບຫ້ອຍຢູ່ເພດານຫໍໂຮງແລະປົມຍອຍສີລິມຸງຄຸນເປັນຕົ້ນຫຼາຍຮູບຫຼາຍຊະນິດ, ໄດ້ສະແດງເຖິງຄວາມເຫຼື້ອມໃສທາງວັດທະນະທຳບູຮານຈີນແລະສີສັນທາງສາສະໜາອັນເຂັ້ມຂຸ້ນ, ພ້ອມທັງສະແດງເຖິງຄວາມມຸ່ງມາດປາຖະໜາອັນດີງາມຂອງຄົນທັງຫຼາຍທີ່ສະແຫວງຫາສັດຈະພາບ, ກຸສົນລະກຳແລະຄວາມດີຄວາມງາມ. ຖ້າຈະປະດັບ "ປົມຍອຍຂອດຍາວຫຼືປົມຖັກສອດຂອດຍາວ "ໃສ່ອໍເກາະມຸ້ງໃນງານດອງຜົວເມຍໃໝ່ກໍ່ປະລິຍາຍໝາຍວ່າ ຄູ່ຜົວເມຍຈະຮັກໄຄ່ກັນຕະຫຼອດໄປ. ຖ້າຈະຕົກແຕ່ງ "ປົມຍອຍສາລະພັດນຶກ "ອັນໜຶ່ງໃສ່ເຄື່ອງຢັກປະດັບ, ກໍ່ຈະປະລິຍາຍໝາຍເຖິງ ສົມຈິດສົມໃຈທຸກປະການ. ຖ້າຕົກແຕ່ງ "ປົມຍອຍມຸງຄຸນ "ອັນໜຶ່ງໃສ່ກ້ານວີ ກໍ່ໝາຍວ່າມີສີລິມຸງຄຸນ, ປະກົດລາງດີມີໂຊກລາບແລະອະນາຄົດສົດໃສ...

ປົມຍອຍຈີນມີຈຸດພິເສດແມ່ນແຕ່ລະປົມຍອຍຖັກສອດຂອດດ້ວຍໄໝເສັ້ນດຽວແຕ່ສົ້ນກົກຫາສົ້ນປາຍ, ແຕ່ລະປົມຍອຍພື້ນຖານມີຊື່ຕາມລັກສະນະຂອງມັນເຊິ່ງເປັນເຄື່ອງປະດັບສີລິມຸງ








ຄຸນມູນເຊື້ອຂອງຈີນທີ່ອຸດົມໄປດ້ວຍເນື້ອໃນແລະຄວາມໝາຍເລິກເຊິ່ງ. ແຕ່ລະປົມຍອຍທີ່ປະດັບປະດາກໍ່ສະແດງເຖິງຄວາມສົ່ງພອນອັນປະເສີດທີ່ເຂັ້ມຂຸ້ນແລະອົບອຸ່ນ, ເປັນຂອງປະເສີດທີ່ສົມລະເສີນແລະເຜີຍແຜ່ຄວາມວິງວອນປາຖະໜາຫານ້ຳໃສໃຈຈິງ, ໃນສະໄໝວັດທະນະທຳທີ່ທົບທວນສືບທາດແທ້ແຍ້ໃຍວັນນີ້, ປົມຍອຍຈີນຂອດໄມຕີກັບຊາວໂລກ, ໄດ້ຮັບຄວາມສົນໃຈນຳເພື່ອນມິດພາຍໃນແລະຕ່າງປະເທດເປັນອັນມາກ.







# ງິ້ວປັກກິ່ງ--
# -ຍອດແຍ້ປະຈຳຊາດຈີນ

## 中国国粹——京剧

京剧是中国的国粹，迄今已有200多年的历史，是流行于中国的重要剧种之一，也是中国文化重要的组成部分。



ງິ້ວປັກກິ່ງເປັນຍອດແຍ້ປະຈຳຊາດຈີນ,ເຊິ່ງມີປະຫວັດ 200 ກວ່າປີມາແລ້ວຈົນເທົ້າທຸກວັນນີ້,ເປັນຊະນິດລະຄອນສຳຄັນປະເພດໜຶ່ງທີ່ແຜ່ຜາຍໃນປະເທດຈີນ,ແລະກໍ່ເປັນພາກສ່ວນປະກອບທີ່ສຳຄັນຂອງວັດທະນະທຳຈີນ.

ປີ 55 ສຽນຫຼົງສະໄໝລາຊະວົງຊິງ(ຄ.ສ.ປີ 1790),ຄະນະຂັບງິ້ວທຳນອງອານຮຸຍ 4 ຄະນະ ເດີມທີສະແດງກັນຢູ່ພາກໃຕ້ໄດ້ທະຍອຍກັນເຂົ້າສູ່ເມືອງປັກກິ່ງສະແດງ,ໄດ້ຮ່ວມມືກັບນັກສິລະປິນຂັບທຳນອງງິ້ວຮ່ານທີ່ມາຈາກຫູເປ,ມີຜົນສະທ້ອນເຊິ່ງກັນແລະກັນ,ທັງຮັບເອົາລາຍການລະຄອນ ທຳນອງຂັບລຳແລະວິທີສະແດງສ່ວນໜຶ່ງຈາກງິ້ວຄຸນຊີແລະງິ້ວສິນແສງພຽບພ້ອມດ້ວຍທຳນອງຂັບລຳພື້ນເມືອງສ່ວນໜຶ່ງອີກຈຶ່ງຄ່ອຍ ໆ ປະສົມກົມກືນ ຜັນຂະຫຍາຍເປັນງິ້ວປັກກິ່ງ.ການສະແດງງິ້ວປັກກິ່ງ.ພິຖີພິຖັນນຳການຂັບຮ້ອງ,ຮ່າຍ,ທຳທ່າແລະຕີບຕີໄປພ້ອມ,ມັກທຳວາດອິລິຍາບົດສົມມຸດ,ປ່ຽນລົ້ນໄປດ້ວຍນ້ຳສຽງແລະຈິດໃຈອາລົມ.

ງິ້ວປັກກິ່ງແບ່ງຕົວລະຄອນງິ້ວເປັນ 4 ປະເພດເວົ້າລວມເຊັ່ນ: 生 (ຕົວລະຄອນງິ້ວເພດຊາຍ), 旦 (ຕົວລະຄອນງິ້ວເພດຍິງ), 净 (ຕົວລະຄອນງິ້ວເພດຊາຍຜູ້ຂຶງຂັງກ້າກັ່ນ), 丑 (ຕົວຕະຫຼົກ), ແຕ່ລະປະເພດຍັງແຍກອອກລະອຽດອີກຕົວຢ່າງ 生 : 老 生 (ຜູ້ສະແດງໄວເຖົ້າເພດຊາຍ), 小 生 (ຜູ້ສະແດງເປັນຊາຍໜຸ່ມ), 娃娃生 (ຜູ້ສະແດງເດັກຊາຍ), 武生 (ຜູ້ສະແດງຄົນຫານ). ປະເພດ 旦 ຍັງແຍກເປັນ 花旦 (ຜູ້ສະແດງຍິງໜຸ່ມນິດໄສຄຶກຄັກແລະເຜັດຮ້ອນ), 青衣 (ຜູ້ສະແດງແມ່ຍິງໄວກາງຄົນຫຼືຍິງໜຸ່ມນຸ່ງເຄື່ອງສີດຳ), 老旦 (ຜູ້ສະແດງແມ່ເຖົ້າ), 武旦 (ຜູ້ສະແດງສະຕີຊຳນານກັງຟູ).ຕາມກໍລະນີທົ່ວໄປ,ແຕ່ລະປະເພດກໍ່ມີຄູ່ສົມທົບການສະແດງ.

ລວດລາຍໜ້າກາກງິ້ວປັກກິ່ງ,ເປັນວິທີແຕ່ງໜ້າທີ່ມີເອກະລັກພິເສດຊົນຊາດ.ເນື່ອງຈາກແຕ່ລະຄົນໃນປະຫວັດສາດຫລືຄົນບາງພ່ອງກໍ່ມີຮູບໂສມຕະໂນມພັນຂອງໃຜມັນ,ລວດລາຍໃບໜ້າເປັນທີ່ສະແດງເຖິງລັກສະນະນິດໄສ ທາງກາຍແລະໃຈຂອງຕົວລະຄອນງິ້ວ.ຕໍ່ມາຈຶ່ງກາຍເປັນສິລະປະລວດລາຍທີ່ສະແດງດ້ວຍໃບໜ້າຂອງຄົນ.





## 踩高跷

踩高跷，是中国民间盛行的一种群众性技艺表演。高跷作为群众喜闻乐见的一种艺术形式，深为群众所欢迎。

# ຢຽບໄມ້ຂາໂຖກເຖກ

ຢຽບໄມ້ຂາໂຖກເຖກ(ຫລືຢຽບໄມ້ໂຢ່ງເຢ່ງ)ເປັນການສະແດງສິລະປະສີມືລັກສະນະມະຫາຊົນແນວໜຶ່ງທີ່ແຜ່ຜາຍກັນຫຼາຍໃນພື້ນເມືອງຈີນ.ການສະແດງໂຖກເຖກເດີມທີເປັນການສະແດງລະຄອນປະເພດໜຶ່ງ,ສະນັ້ນ ກ່ອນ ຄ.ສ.500ກວ່າປີມັນກໍ່ໄດ້ນິຍົມຫຼິ້ນກັນມາແລ້ວ.ຜູ້ສະແດງບໍ່ສະເພາະແຕ່ມັດຕີນໄວ້ກັບໄມ້ຂາຍາວແລ້ວຍ່າງໄປຕາມສະບາຍຫາກຍັງສາມາດ





ຕັ້ນລົງແລະຟ້ອນຄວນຄາບອີກ. ໂຖກເຖກແຍກເປັນໂຖກເຖກຂາຍາວ ໂຖກເຖກຂາປານກາງແລະໂຖກເຖກແລ່ນສາມແນວ, ໂຖກເຖກຂາຍາວທີ່ສຸດຮອດ 3 ແມັດປາຍ. ຕາມປຶ້ມບູຮານໄດ້ຈາລຶກໄວ້ວ່າ: ໂຖກເຖກສະໄໝບູຮານລ້ວນແຕ່ເຮັດດ້ວຍລຳໄມ້, ໄສລຳໄມ້ໃຫ້ກ້ຽງດີແລ້ວເຮັດເດືອຍໃສ່ສ່ວນທາງກາງເພື່ອຢຽບ, ແລ້ວເອົາເຊືອກມັດແຄ່ງໄວ້. ຜູ້ຢຽບໄມ້ຂາໂຖກເຖກສາມາດສະແດງອິລິຍາທ່າທີຟ້ອນຄວນຄາບ, ຈ່າງຂານັ່ງຈຸດິນ, ເຕັ້ນຂຶ້ນຕັ່ງ, ເຕັ້ນຂ້າມໂຕະແລະຟ້ອນຢ້າງໂກ້ເປັນຕົ້ນ. ໃນການຟ້ອນຢ້າງໂກ້ຢຽບໄມ້ໂຖກເຖກໃນພາກເໜືອຈີນນັ້ນ, ຕົວສະແດງມັກແຕ່ງເພດເປັນເຖົ້າຫາປາ, ແມ່ສີ່, ລູກເຈົ້າຫຼານນາຍທີ່ໂງ່ຈ້າ, ນາງຊີເຕົ໋າແລະພະສົງເປັນຕົ້ນ. ຜູ້ສະແດງແຕ່ງຕົວເປັນຕາຕະຫຼົກ, ຊອນໃຫ້ຜູ້ຊົມຊື່ນຊົມສະໜຸກສະໜານເຕັມທີ. ການສະແດງໂຖກເຖກໃນພາກໃຕ້ຈີນ, ຜູ້ສະແດງສ່ວນຫຼາຍແມ່ນແຕ່ງເພດຕົວສະແດງໃນລະຄອນ, ເຂົາເຈົ້າທັງສະແດງທັງຂັບຮ້ອງໄປພ້ອມ, ມີບັນຍາກາດຄຶກຄັກທັງມີຊີວິດຊີວາ, ປ່ຽມລົ້ນໄປດ້ວຍສຽງຫົວຊົມຊ້ອຍຊື່ນ. ຕາມເລົ່າກັນມາວ່າ ຮູບການຢຽບໄມ້ຂາໂຖກເຖກນີ້, ແຕ່ທີ່ແຮກແມ່ນຄົນສະໄໝບູຮານມັດລຳໄມ້ສອງອັນໃສ່ຕີນຊ້າຍຕີນຂວາເພື່ອຢື້ມືປິດໝາກໄມ້ຕາມຕົ້ນໄມ້ມາກິນ, ຖັດມາກໍ່ເລີຍກາຍເປັນການຫຼິ້ນຢຽບໄມ້ຂາໂຖກເຖກສະແດງເປັນລາຍການປະເພດໜຶ່ງ.

ເມື່ອບຸນກຸດຈີນ(ບຸນກິນຈຽງ)ວຽນມາເຖິງ, ມີຫຼາຍທ້ອງຖິ່ນໃນເມືອງຈີນກໍ່ນິຍົມກັນຢຽບໄມ້ຂາໂຖກເຖກ. ຊຸມໝູ່ທີ່ແຕ່ງເພດແຕ່ງກາຍຢຽບໄມ້ໂຢ່ງເຢ່ງຈັບກ້ານວີ ກວັດແກວ່ງຟ້ອນໄປວຽນມາ, ມີການຟ້ອນລວມໝູ່ເປັນຄູ່ກັນ, ກໍ່ມີຊຸມໝູ່ 3 ຄົນຟ້ອນກ້ຽວລ້ຽວຫາກັນ, ຈັ່ງແມ່ນຊວນໃຫ້ຜູ້ຄົນເງີຍໜ້າເບິ່ງ, ສຽງຫົວຊົມຊື່ນຝົດສະໜັ່ນບໍ່ຂາດສາຍ.

ມາໃນປະຈຸບັນ, ການສະແດງໂຖກເຖກເປັນຮູບການສິລະປະແບບໜຶ່ງທີ່ມວນຊົນນິຍົມຊົມຊອບ, ແລະກໍ່ຖືກແຖມຕື່ມເນື້ອໃນອັນໃໝ່, ຫລືສະແດງເປັນລະຄອນກ້ອມຫລືສະແດງເປັນຕົວສະແດງໃນລະຄອນ, ຊຶ່ງໄດ້ຮັບຄວາມນິຍົມຊົມເຊີຍຈາກມະຫາຊົນຢ່າງເລິກເຊິ່ງ.





## 北京故宫

北京故宫博物院，原来是明清两朝的皇宫，位于北京城的中心。明清时称紫禁城，1925年开始称为故宫，是全世界规模最大、保存最完好的古代皇宫建筑群；也是中国古代建筑最高水平的杰作，被誉为世界五大宫之一（五大宫为北京故宫、凡尔赛宫、白金汉宫、白宫、克里姆林宫），被联合国科教文组织列为“世界文化遗产”。

# ລາຊະວັງເກົ່າປັກກິ່ງ



ຫໍພິພິທະພັນລາຊະວັງເກົ່າປັກກິ່ງ,ເດີມທີເປັນລາຊະວັງຂອງເຈົ້າຈັກກະພັດ(ຮ່ອງເຕ້)ສະໄໝລາຊະວົງໝິງແລະລາຊະວົງຊິງ,ຕັ້ງຢູ່ໃຈກາງ ໂຕເມືອງປັກກິ່ງ.ສະໄໝລາຊະວົງໝິງກັບຊິງຮຽກວ່າ ເມືອງຫວງຫ້າມ(the Forbidden City),ຮອດປີ 1925 ຈິ່ງຮຽກກັນວ່າ ລາຊະວັງເກົ່າ.ມັນກວມເນື້ອທີ່ຕາດິນ 7 ແສນ 2 ໝື່ນຕາແມັດ,ປະຈຸບັນຍັງມີເຄຫະສະຖານ 980ກວ່າຫຼັງ,ມີຫ້ອງເຮືອນ 8700ກວ່າຫ້ອງ,ເນື້ອທີ່ກໍ່ສ້າງ 1.5 ແສນຕາແມັດ.ເປັນກຸ່ມເຄຫະສະຖານລາຊະວັງເຈົ້າຈັກກະພັດບູຮານ



ທີ່ຮັກສາໄວ້ຄົບຖ້ວນທີ່ສຸດແລະຂະໜາດໃຫຍ່ສຸດໃນທົ່ວໂລກ.ແລະກໍ່ແມ່ນສະຖາປັດຕະຍະກຳໂບຮານຈີນທີ່ມີລະດັບສູງເດັ່ນ,ຖືກຂະໜານນາມເປັນໜຶ່ງໃນ 5 ວັງຂອງໂລກ ( 5 ວັງຄື:ລາຊະວັງເກົ່າປັກກິ່ງ,ວັງແວກໄຊ,ວັງບັກຄິງແຮມ,ທຳນຽບຂາວ,ວັງແກຼັມແລັງ),ຖືກອົງການອຸຍແນັສໂກສະຫະປະຊາຊາດຮັບຮອງເປັນ "ມໍລະດົກວັດທະນະທຳຂອງໂລກ".

## ສະຖາປັດຕະຍະກຳໂບຮານທີ່ຫາອັນປຽບບໍ່ໄດ້

ວັງທໍໃນເມືອງຫວງຫ້າມລ້ວນແຕ່ແມ່ນໂຄງປະກອບໄມ້,ກະເບື້ອງເຄືອບສີເຫຼືອງມຸງຫຼັງຄາ,ພື້ນປູດ້ວຍຫີນອ່ອນ,ປະດັບໄປດ້ວຍພາບລະບາຍສີຮຸ່ງເຮືອງຫລູຫລາ.ວັງທໍເຫຼົ່ານີ້ຮຽງປຽດຊື່ໄປທິດໃຕ້ຫາທິດເໜືອ,ຕັ້ງເປັນແຖວຊ້າຍແຖວຂວາ,ມີເສັ້ນທາງລະຫວ່າງກາງຜ່ານເມືອງກ້ຳໃຕ້ໄປເຖິງປະຕູຢົງຕິງເໝີນ,ກ້ຳເໜືອຮອດພູເຫຼົາ(ທໍກອງ),ຈິ້ງເຫຼົາ(ທໍລະຄັງ),ຈົນຊອດໄປທົ່ວພາຍໃນເມືອງຫວງຫ້າມ.

## ວັງໃນທີ່ມີລົດຊາດຊີວິດການເປັນຢູ່

ສ່ວນຕອນຫຼັງຂອງເຂດທະສະຖານລາຊະວັງເກົ່າຮຽກວ່າ ວັງໃນ,ໃຈກາງແມ່ນວັງສຽນຊິງ,ຜາສາດແຈວຖ່າຍແລະວັງຄຸນໜີງ,ສອງປີກຂ້າງກ້ຳຕາເວັນອອກຫາກ້ຳຕາເວັນຕົກມີບີວລະພາ 6 ວັງ,ປະຈິມ 6 ວັງ,ເປັນບ່ອນຮອງເຕ້(ເຈົ້າຈັກກະພັດ)ເຮັດການຊົງພະລາຊະດຳລັດແລະຮ່ວມຊີວິດກິນຢູ່ກັບພະຊາຍາ.ວາດທຳນອງເຂດທະສະຖານສ່ວນຕອນຫຼັງກໍ່ຄືສ່ວນຕອນໜ້າພາບພົດຂອງສ່ວນຕອນໜ້າແມ່ນເຄັ່ງຂຶມ ໂອ້ໂຖງແລະສະຫງ່າຜ່າເຜີຍຊຶ່ງໄດ້ເປັນສັນຍາລັກວ່າຮອງເຕ້ເປັນສິ່ງສູງສຸດ.ສ່ວນຕອນຫຼັງວັງໃນປ່ຽມລົ້ນໄປດ້ວຍລົດຊາດຊີວິດການເປັນຢູ່,ເຂດທະສະຖານສ່ວນຫຼາຍມີເດີ່ນບ້ານ,ມີສວນດອກໄມ້,ຫ້ອງອ່ານໜັງສື,ທໍໂຮງແລະພູເຂົາຜາຫີນເປັນຕົ້ນ.ຢູ່ກ້ຳເໜືອຂອງວັງຄຸນໜີງແມ່ນສວນອາດອຸດທິຍານ.ໃນອຸດທິຍານມີຕົ້ນສົນຕົ້ນແປກທີ່ສູງຕະຫງ່ານ,ມີຕົ້ນໄມ້ໃບຫຍ້າທີ່ມີຄ່າແພງ,ມີພູເຂົາຜາຫີນແລະສາລາພັກຜ່ອນຢ່ອນໃຈ.

## ສາງມູນມັງວັດຖຸບູຮານວັດທະນະທຳທີ່ຫາຍາກ

ວັງທໍຈຳນວນໜຶ່ງໃນທໍລາຊະວັງເກົ່າຍັງໄດ້ຕັ້ງທໍສິລະປະປະ



ຫວັດສາດສັງລວມ,ຫໍຮູບແຕ້ມ,ຫໍເຄື່ອງປັ້ນດິນເຜົາແຍກປະເພດ,ຫໍເຄື່ອງທອງກົ່ວ,ຫໍສິລະປະກຳສະໄໝລາຊະວົງໝິງແລະຊິງ,ຫໍອັກສອນທີ່ແກະສະຫຼັກຈາລຶກເຫດການ,ຫໍເຄື່ອງຫຼິ້ນເດັກນ້ອຍ,ຫໍເຈ້ຍສໍນ້ຳໝຶກພູ່ກັນ,ຫໍຂອງຫຼິ້ນ,ຫໍເຜັດນິນຈິນດາ,ຫໍໂມງຊະນິດຕ່າງ ໆແລະການວາງສະແດງວັດຖຸບູຮານວັດທະນະທຳກ່ຽວກັບລະບຽບດຳລັດຄຳສັ່ງເປັນຕົ້ນ,ຍັງໄດ້ຫ້ອນໂຮມຂອງລ້ຳຄ່າສິລະປະສະໄໝບູຮານຢ່າງມາກມາຍກ່າຍກອງ,ຕາມສະຖິຕິທັງໝົດມີຮອດ 1.052.653 ລ້ານຊະນິດ,ກວມຍອດຈຳນວນວັດຖຸບູຮານວັດທະນະທຳທົ່ວປະເທດ 1 ສ່ວນ 6 ,ເປັນຫໍພິພິທະພັນທີ່ຫ້ອນໂຮມບູຮານວັດຖຸວັດທະນະທຳຫຼາຍທີ່ສຸດພາຍໃນປະເທດຈີນ.




## ສົ່ງເສີມການແລກປ່ຽນວັດທະນະທຳ ກັບບັນດາປະເທດໃນໂລກ

ວັດຖຸບູຮານວັດທະນະທຳລາຊະວັງເກົ່າຈັດແຍກເປັນສອງລະບົບວາງສະແດງເປັນຕົ້ນຄືະພາບເດີມລາຊະວັງແລະສິລະປະບູຮານ,ໄດ້ຈັດວາງສະແດງພາບເດີມ 51 ແຫ່ງຕາມລຳດັບ,ມີລັກສະນະຄວາມຈິງໜັກແໜ້ນ,ຕັ້ງຫໍສະເພາະ 10 ກວ່າແຫ່ງ,ໄດ້ຈັດວາງສະແດງປະເພດຕ່າງ ໆຫຼາຍຮ້ອຍກວ່າຄັ້ງຕາມລຳດັບ,ຍັງໄດ້ນຳເອົາພາບຈຳລອງໄປວາງສະແດງທີ່ທະວີບທັງຫ້າເອີລົບ ອາຊີ ອາເມລິກາ ອົດສະຕຣາລີແລະອາຟຣິກກາຫຼາຍສິບຄັ້ງ,ເພື່ອໂຄສະນາເຜີຍແຜ່ມູນເຊື້ອສິລະປະວັດທະນະທຳບູຮານອັນຮຸ່ງເຮືອງໃສຂອງເມືອງຈີນ,ສົ່ງເສີມການແລກປ່ຽນວັດທະນະທຳກັບບັນດາປະເທດໃນໂລກ.









# ຈ້ຽນສວຍ-- ເມືອງວັດທະນະທຳບູຮານປະຫວັດສາດຈີນ

## 中国云南历史文化古城 —— 建水

建水县是中国国家历史文化名城和国家重点风景名胜区，有1200多年的历史，历来是滇南政治、军事、经济、文化和交通中心，历史悠久，被誉为“文献名邦”。

ເມືອງຈ້ຽນສວຍເປັນເມືອງວັດທະນະທຳລືຊື່ປະຫວັດສາດແຫ່ງຊາດປະເທດຈີນແລະເຂດທິວທັດຊ່າລືທີ່ເປັນຈຸດສຸມແຫ່ງຊາດ,ໄດ້ມີປະຫວັດສາດ 1200 ກວ່າປີມາແລ້ວ,ຕັ້ງແຕ່ໃດມາກໍ່ເປັນໃຈກາງແຫ່ງການເມືອງ,ການທະຫານ,ເສດຖະກິດ,ວັດທະນະທຳແລະຄົມນາຄົມຂອງພາກໃຕ້ຢູນນານ,ຖືກຂະໜານນາມວ່າ"ເມືອງລືຊື່ໄປດ້ວຍເອກະສານ".

ເມືອງຈ້ຽນສວຍມີປະຫວັດສາດຍາວນານ,ບູຮານສະຖານກໍ່ຊຸມລຸມຢູ່ຢ່າງຫຼາກຫຼາຍ,ມີເຄຫະສະຖານບູຮານແຕ່ລະສະໄໝລາຊະວົງທີ່ຍັງຮັກສາໄວ້ເຊັ່ນ:ລາຊະວົງຢວນ--ໝິງ--ຊິງ ເກືອບຮ້ອຍບ່ອນ,ຂົວສະພານບູຮານເກົ່າແກ່ 50 ກວ່າຂົວ,ອາດຈະເວົ້າໄດ້ວ່າ"ຫໍພິພິທະພັນເຄຫະສະຖານບູຮານ".ໃນນັ້ນມີວັດໄຫວ້ຂົງຈື້ຂະໜາດໃຫຍ່ທີ່ມີຊື່ລືນາມຂອງຈີນ,ມີວັດຈີຫຼິນທີ່ມີປະຫວັດສາດ 700 ປີ,ມີຂົວຄູ່ມັງກອນບູຮານແບບສາລາແລະຕຶກຊາວປາງເຄຫະສະຖານປຸກສ້າງໃນສະໄໝລາຊະວົງໝິງ,ຍັງມີຫໍໂຮງຕ່າງ ໆທີ່ຮັກສາໄວ້ຢ່າງຄົບຖ້ວນ. ໂດຍສະເພາະແມ່ນສວນດອກໄມ້ຂອງເຮືອນຈູແລະເຮືອນຈາງເປັນຕົວຢ່າງສວນອາດອຸດທິຍານຂອງເອກະຊົນທີ່ມີເອກະລັກສະເພາະໃນທ້ອງຖິ່ນ,ເປັນຈຸດທ່ຽວຊົມທັດສະນາຈອນຂອງຄົນທັງຫຼາຍ.





ຂຸມນ້ຳສ້າງໃນຈ້ຽນສວຍກໍ່ຊ່າລືຄືກັນ,ບໍ່ພຽງແຕ່ຈຳນວນມາກຫຼາຍ,ການກໍ່ສ້າງກໍ່ມີສີສັນເອກະລັກພິເສດອີກ,ມີຂຸມນ້ຳ





ສ້າງທີ່ຂຸດເຈາະຕັ້ງແຕ່ຕົ້ນລາຊະວົງຢວນຍັງໃຊ້ກັນຈົນເທົ້າທຸກວັນນີ້,ຢູ່ປະຕູໂຂງກໍ້າຕາເວັນຕົກມີຂຸມນ້ຳສ້າງບັກໃຫຍ່ທີ່ສະໜອງນ້ຳດື່ມໃຫ້ທົ່ວເມືອງ.ຂຸມນ້ຳສ້າງບູຮານທີ່ໄດ້ຜ່ານພົນປີວິວັດທະນາການມາ ມັນໄດ້ຈາລຶກເອົາປະຫວັດສາດຂອງເມືອງຈ້ຽນສວຍ,ແລະກໍ່ເປັນຫຼັກຖານຢືນຢັນຄວາມຈະເລີນຮຸ່ງເຮືອງຂອງວັດທະນະທຳຈົ້ງຈີ້ໃນເມືອງບູຮານເກົ່າແກ່ອີກດ້ວຍ.












ຕ້ອງການຂໍ້ມູນລະອຽດ ເຊີນຕິດຕໍ່: ບໍລິສັດທ່ອງທ່ຽວ ຈຳປາລາວ

For more information, Please contact CHAMPA LAO TRAVEL

TEL:(++865.21).216616. FAX:(++856.21)215260.

# ຈຳປາລາວ





ເຊີນທ່ານ ທ່ອງທ່ຽວ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ.
ດິນແດນທີ່ສວຍງາມ ດ້ວຍທຳມະຊາດ,ອຸດົມຮັ່ງມີທາງ ດ້ານປະຫວັດສາດ,
ວັດທະນະທຳ ແລະຫລາຍຊົນຊາດ ຊົນເຜົ່າ,
ເປັນຕົ້ນ: ນະຄອນຫລວງວຽງຈັນ-ເມືອງມໍລະດົກໂລກຫລວງພະບາງ-
ວັດພູຈຳປາສັກ-ທົ່ງໄຫຫີນ-ນ້ຳຕົກຄອນພະເພັງ-ຫລີ່ຜີ ແລະອື່ນໆ.



主要有：
首都万象市
世界文化遗产——
琅勃拉邦
占芭色瓦普寺
查尔平原（石缸平原）
宽帕盆大瀑布
里皮等名胜古迹

*Visit Laos P,D,R, one of the premier holiday destination, with its sunny, the beautiful nature, the rivers and the warm smiles of the local people, Rich tradition and culture and many ethnic groups. Visit Vientiane, the capitale, LuangPrabang, wat Phou temple, the plain of Jars: The world heritage sites and the big water falls KhonPhaPheng, LiPhi etc... Contact us today and you will be welcome.*



# ແຂວງຢູນນານເລີ່ມດຳເນີນສ້າງສາຊົນນະບົດໃໝ່ຮອບດ້ານ

## 云南省全面启动新农村建设

“生活宽裕，环境优美，看得起病，上得起学……”围绕着农民这份期盼，云南省立足省情，以实施产业支撑打造工程、农民增收促进工程、基础设施夯实工程等“十大建设工程”和完善农业科技创新推广体系、农村新型社会保障体系等“六大支撑体系”，以及一系列扶农惠农助农举措，全面启动新农村建设。

ຄວາມປາຖະໜາຂອງຊາວກະສິກອນທີ່ຫວັງຈະມີ: "ຊີວິດອັນອີ່ມໜຳສຳລານ, ສະພາບແວດລ້ອມສົດສວຍງາມຕາ, ໄດ້ຮັກສາຕົວປົວພະຍາດແລະໄດ້ເຂົ້າໂຮງຮ່ຳໂຮງຮຽນ...", ແຂວງຢູນນານອີງຕາມສະພາບພາຍໃນແຂວງ, ໂດຍປະຕິບັດໂຄງການກໍ່ສ້າງຄ້ຳຈຸນຊັບສິນ, ດຳເນີນໂຄງການສົ່ງເສີມເພີ່ມລາຍຮັບແກ່ຊາວກະສິກອນແລະໂຄງການສ້າງພື້ນຖານໂຄງລ່າງໃຫ້ແໜ້ນໜາເປັນຕົ້ນ "10 ໂຄງການສ້າງສາ" ແລະບູລະນະລະບົບສາຍໃຍເຜີຍແຜ່ການປະດິດວິທະຍາສາດ--ເຕັກນິກອັນໃໝ່ທາງກະສິກຳແລະລະບົບປະກັນໄພສັງຄົມແບບໃໝ່ໃນຊົນນະບົດເປັນຕົ້ນ "ລະບົບສາຍໃຍຄ້ຳຈຸນ 6 ປະການ" ຕະຫຼອດຮອດມາດຕາການຕ່າງ ໆທີ່ອູ້ມຊູຊ່ວຍເຫຼືອຊາວກະສິກອນແລະສ້າງຜົນດີແກ່ຊາວກະສິກອນ, ດຳເນີນສ້າງສາຊົນນະບົດໃໝ່ໂດຍຮອບດ້ານ.

ປີນີ້, ແຂວງຢູນນານໄດ້ຕັ້ງໜ້າເອົາບາດກ້າວເລີ່ມແຮກໜັກ



ແພັນເພື່ອຍາດໄດ້ຜົນຕົວຈິງນັ້ນ ເປັນເປົ້າໝາຍສູ້ຊົນໃນການສ້າງສາຊົນນະບົດໃໝ່. ໂດຍແນໃສ່ມາດຖານກອມລອມຕາມຄວາມຈິງໄດ້ສະເໜີໃຫ້ສ້າງສາຊົນນະບົດໃໝ່ຕ້ອງຍຶດໝັ້ນວາງແຜນເປັນເອກະພາບ, ຊຸກຍູ້ທົ່ວໝູ່ບ້ານ, ເຮັດໃຫ້ເໝາະກັບສະພາບຂອງແຕ່ລະທ້ອງຖິ່ນແລະຊີ້ນຳໂດຍແຍກຕາມປະເພດ, ແລະເອົາຈຸດສຸມຂອງການສ້າງສາຊົນນະບົດໃໝ່ເພັ່ງເລັງໃສ່ແກ້ໄຂບັນຫາຕົວຈິງທີ່ຈະຕ້ອງຮີບຮ້ອນແກ້ໄຂໃນທ່າມກາງການຜະລິດກໍ່ຄືຊີວິດການເປັນຢູ່ຂອງຊາວກະສິກອນ, ເຮັດໃຫ້ການສ້າງສາຊົນນະບົດໃໝ່ນີ້ນຳຜົນປະໂຫຍດຕົວຈິງມາສູ່ຊາວກະສິກອນຢ່າງແທ້ຈິງ. ໂດຍເອົາການເພີ່ມລາຍຮັບແກ່ຊາວກະສິກອນເປັນແກ່ນສານ, ການສ້າງສາຊົນນະບົດໃໝ່ຂອງແຂວງຢູນນານຈະດຳເນີນໂຄງການກໍ່ສ້າງຄ້ຳຈຸນຊັບສິນ, ໂຄງການສົ່ງເສີມເພີ່ມລາຍຮັບແກ່ຊາວກະສິກອນ, ໂຄງການສູ້ຊົນອູ້ມຊູຜູ້ທຸກຈົນພັດທະນາ, ໂຄງການສ້າງພື້ນຖານໂຄງລ່າງໃຫ້ແໜ້ນໜາ, ໂຄງການອະນຸຮັກສິ່ງແວດລ້ອມນິເວດ, ໂຄງການພັດທະນາກິດຈະການສັງຄົມ, ໂຄງການສີວິໄລທາງຮີດຄອງປະເພນີໝູ່ບ້ານແລະໂຄງການປັບປຸງໂສມໜ້າໝູ່ບ້ານເປັນຕົ້ນ "10 ໂຄງການສ້າງສາ", ບູລະນະແລະເສີມທ່າແຮງເກື້ອກູນກະສິກຳກໍ່ຄືຊາວກະສິກອນໂດຍກົງ, ຂະຫຍາຍຂະໜາດເກື້ອກູນພືດພັນທັນຍາຫານໂດຍກົງແລະເກື້ອກູນແນວພັນດີຫຼືຈັດຊື້ເຄື່ອງຈັກກະສິກຳ; ຂະຫຍາຍຂະໜາດດຳເນີນ "ໂຄງການເຝິກອົບຮົມຄົນງານນັບເປັນລ້ານ" "ໂຄງການແສງສຸລີ" ເປັນຕົ້ນ, ສົ່ງເສີມໃຫ້ຫັນຍ້າຍແຮງງານໃນຊົນນະບົດ; ສຸມໃສ່ເປົ້າໝາຍສ້າງສາແຂວງທີ່ມີທ່າແຮງເສດຖະກິດສີຂຽວ, ເລັ່ງລັດພັດທະນາຊັບສິນທີ່ມີທ່າແຮງເປັນພິເສດ, ຄຽງຄູ່ກັບການປັບປຸງແລະເຊີດຊູຊັບສິນທ່າແຮງອັນເປັນມູນເຊື້ອໄດ້ແກ່ໃບຢາ, ນ້ຳຕານ, ໃບຊາ, ຢາງພາຣາ, ການລ້ຽງປະສຸສັດແລະປ່າໄມ້ແລ້ວ, ອອກແຮງພັດທະນາຊັບສິນທ່າແຮງຈະເລີນໃໝ່ເຊັ່ນ: ດອກໄມ້, ຢາສະໝຸນໄພຈີນ, ພືດຜັກ, ມັນຝະລັ່ງແລະກາເຟເປັນຕົ້ນ, ຫາທຸກວິທີເພີ່ມລາຍຮັບແກ່ຊາວກະສິກອນ; ປົວແປງເງື່ອນໄຂການຜະລິດແລະຊີວິດການເປັນຢູ່ໃນຊົນນະບົດໃຫ້ດີຂຶ້ນ, ຊຸກຍູ້ໃຫ້ສາມັນສຶກສາລະຫວ່າງໂຕເມືອງກັບຊົນນະບົດພັດທະນາຢ່າງສະໝ່ຳສະເໝີ, ຍົກສູງລະດັບປະກັນສຸຂາພິບານຂອງຊາວກະສິກອນເທື່ອລະກ້າວ. ພ້ອມກັນນັ້ນ, ບູລະນະລະບົບສາຍໃຍຄ້ຳຈຸນການປະດິດວິທະຍາສາດ--ເຕັກນິກອັນໃໝ່, ລະບົບບໍລິການສັງຄົມໃນຊົນນະບົດແລະລະບົບປະກັນໄພສັງຄົມແບບໃໝ່ໃນຊົນນະບົດເປັນຕົ້ນລະບົບສາຍໃຍຄ້ຳຈຸນ 6 ປະການ, ບຳລຸງກໍ່ສ້າງຊາວກະສິກອນແບບໃໝ່, ເລັ່ງບາດກ້າວສ້າງສາກະສິກຳທັນສະໄໝ, ສ້າງຕັ້ງລະບົບສາຍໃຍປະກັນແລະສັງຄົມສົງເຄາະທີ່ແທດເໝາະກັບຄວາມເປັນຈິງໃນຊົນນະບົດເທື່ອລະກ້າວ, ຮັບປະກັນການສ້າງສາຊົນນະບົດໃໝ່ນຳເອົາຜົນປະໂຫຍດຕົວຈິງມາສູ່ຊາວກະສິກອນຢ່າງແທ້ຈິງ.




## 云南加快
## 信息产业和电子政务建设

“十五”时期，云南省信息产业和信息化建设事业全面推进。信息产业以年均两位数的增长率快速发展，信息基础设施进一步完善，建立了覆盖全省的统一电子政务基础设施，促进政府管理及服务的能力和水平，国民经济和社会领域的信息化程度不断提高，信息安全体制和工作机制初步建立。



# ຢູນນານເລັ່ງລັດສ້າງສາອຸດສາຫະກຳຂໍ້ມູນ ຂ່າວສານແລະເອເລັກໂຕຣນິກລັດຖະການ

ຊ່ວງໄລຍະ "ແຜນການ 5 ປີຄັ້ງທີ 10 ",ອຸດສາຫະກຳຂໍ້ມູນຂ່າວສານແລະພາລະກິດສ້າງສາເປັນແບບຂໍ້ມູນຂ່າວສານຂອງແຂວງຢູນນານໄດ້ຄືບກ້າວໂດຍຮອບດ້ານ. ອຸດສາຫະກຳຂໍ້ມູນຂ່າວສານພັດທະນາຢ່າງໄວວາດ້ວຍອັດຕາເຕີບໂຕສະເລ່ຍປີລະສອງຕົວເລກ, ພື້ນຖານໂຄງລ່າງຂອງຂໍ້ມູນຂ່າວສານໄດ້ບູລະນະໃຫ້ສົມບູນຕື່ມອີກ, ໄດ້ສ້າງພື້ນຖານໂຄງລ່າງເອເລັກໂຕຣນິກລັດຖະການເປັນເອກະພາບກວມທົ່ວແຂວງ, ທັງໄດ້ສ້າງເຄືອຂ່າຍສະເພາະທາງວິຊາສະເພາະທົ່ວແຂວງ 24 ແຫ່ງເປັນຕົ້ນຄື:ຫ້ອງການອົງຄະນະພັກ ຫ້ອງການສະພາຜູ້ແທນປະຊາຊົນ ຫ້ອງການຄະນະປົກຄອງແລະຫ້ອງການສະພາປຶກສາການເມືອງແລະລະບົບນຳໃຊ້ຈຳນວນໜຶ່ງ, ອົງການລັດຖະການແຕ່ລະຂັ້ນໄດ້ສ້າງລະບົບເຮັດການບົນເຄືອຂ່າຍ 146 ແຫ່ງຕາມເຄືອຂ່າຍເອເລັກໂຕຣນິກລັດຖະການ, ມີ 16 ກົ່ງແຂວງແລະ 93% ພາກຂັ້ນແຂວງໄດ້ສ້າງຖານເຄືອຂ່າຍເຊື່ອມໂຍງຕໍ່ກັນ, ພ້ອມທັງໄດ້ສ້າງລະບົບເຮັດວຽກປະຈຳສາຍແລະຄຳລຳກ່ຽວຂ້ອງຂອງຂໍ້ມູນຂ່າວສານລັດຖະການເປີດເຜີຍ, ຊຸກຍູ້ສົ່ງເສີມລະດັບແລະຄວາມສາມາດຄຸ້ມຄອງບໍລິການຂອງຄະນະປົກຄອງ, ຍົກສູງລະດັບເປັນຂໍ້ມູນຂ່າວສານໃນຂົງເຂດເສດຖະກິດແຫ່ງຊາດແລະສັງຄົມຢ່າງຕໍ່ເນື່ອງ, ລະບົບຂໍ້ມູນຂ່າວສານປອດໄພແລະກົນໄກເຮັດວຽກກໍ່ໄດ້ສ້າງຂຶ້ນເປັນເບື້ອງຕົ້ນ.

ອີງຕາມເປົ້າໝາຍກວມລວມຂອງ《ໂຄງການສ້າງສາເອເລັກໂຕຣນິກລັດຖະການ ປີ 2005--2007ຂອງແຂວງຢູນນານ》,ເມື່ອຮອດທ້າຍປີ 2007, ແຂວງຢູນນານຈະສຸມໃສ່ຍົກສູງຄວາມສາມາດແລະລະດັບບໍລິການຄຸ້ມຄອງອົງການລັດຖະການຢ່າງຮອບດ້ານເປັນແກ່ນສານ, ເອົາຜົນການນຳໃຊ້ເອເລັກໂຕຣນິກລັດຖະການເປັນຈຸດສຸມ, ສ້າງເປັນລະບົບເອເລັກໂຕຣນິກລັດຖະການທົ່ວແຂວງທີ່ຄ່ອນຂ້າງຄົບຖ້ວນແລະຕອບ




ສະໜອງຄວາມຮຽກຮ້ອງຕ້ອງການຂອງອົງການລັດຖະການແລະຂອງປະຊາຊົນ, ເຮັດໃຫ້ເອເລັກໂຕຣນິກລັດຖະການເປັນປ່ອງສຳຄັນຮັບໃຊ້ປະຊາຊົນແລະເປັນເຄື່ອງມືສຳຄັນຂອງການເຄື່ອນໄຫວທາງລັດຖະການ.

ໃນໄລຍະຕໍ່ໄປພາຍໜ້າ, ການສ້າງສາເປັນແບບຂໍ້ມູນຂ່າວສານຂອງແຂວງຢູນນານຈະເອົາທັດສະນະວິທະຍາສາດເປັນທິດຊີ້ນຳ, ປະສານກັບພາກຕົວຈິງຢູນນານ, ສ້າງພື້ນຖານສື່ສານຂໍ້ມູນຂ່າວສານໃຫ້ແໜ້ນໜາ, ຊຸກດັນການສ້າງສາອຸດສາຫະກຳຂໍ້ມູນຂ່າວສານແລະເສດຖະກິດແຫ່ງຊາດເປັນແບບຂໍ້ມູນຂ່າວສານ; ແລະນໍລະສຸມໃສ່ສ້າງຄະນະປົກຄອງເປັນແບບລະບອບກົດໝາຍ, ແບບບໍລິການແລະແບບຮັບຜິດຊອບ, ຍົກສູງລະດັບນຳໃຊ້ເອເລັກໂຕຣນິກລັດຖະການແລະລະດັບບໍລິການ; ເອົາໃຈໃສ່ນຳການສ້າງລະບົບຮັບປະກັນຂໍ້ມູນຂ່າວສານປອດໄພ, ບັນລຸການພັດທະນາປະສານກົມກຽວທາງຂໍ້ມູນຂ່າວສານກັບຂໍ້ມູນຂ່າວສານປອດໄພ; ເພີ່ມທະວີສ້າງສັນຖັນແຖວບຸກຄະລາກອນຂໍ້ມູນຂ່າວສານແລະວຽກງານທາງສຽງໂຄສະນາ, ສ້າງຕັ້ງກົນໄກວຽກງານຕິດຕາມປະສິດທິພາບຍາວນານຕໍ່ການສ້າງສາເປັນແບບຂໍ້ມູນຂ່າວສານ, ພະຍາຍາມສ້າງສະພາບແວດລ້ອມອັນດີທີ່ອຳນວຍຜົນແກ່ການພັດທະນາຂໍ້ມູນຂ່າວສານ.




# ການຮ່ວມມືດ້ານການສຶກສາຂອງແຂວງຢູນນານ ກັບປະເທດອ້ອມຂ້າງເກີດໝາກຜົນຢ່າງມະຫາສານ

## 云南省与周边国家教育合作结硕果

云南省发挥独特区位优势，抓住国家实施“澜沧江—湄公河次区域经济合作”、“中国—东盟自由贸易区建设”等战略的良好契机，多种形式培养次区域合作急需人才，积极与周边国家开展教育合作与交流。

ຕົ້ນປີນີ້ ການຮ່ວມມືແລກປ່ຽນການສຶກສາກັບພາຍນອກຂອງແຂວງຢູນນານໄດ້ສົ່ງຂ່າວໄຊຊະນະຢ່າງລຽນຕິດ,ມະຫາວິທະຍາໄລຢູນນານໄດ້ຮ່ວມມືກັບມະຫາວິທະຍາໄລເໜືອໃຕ້ປະເທດບັງກະລາເດັດໄດ້ສ້າງຕັ້ງວິທະຍາຄານຂົງຈື້ຂຶ້ນ,ມະຫາວິທະຍາໄລສ້າງຄູຢູນນານເປັນສະຖາບັນການສຶກສາຊັ້ນສູງຫລັງທຳອິດຂອງແຂວງຢູນນານ ສາມາດຮັບເອົານັກສຶກສາຕ່າງປະເທດທີ່ໄດ້ທຶນການສຶກສາຈາກລັດຖະບານຈີນ. ນີ້ແມ່ນໝາກຜົນການເສີມທ່າແຮງຂອງທີ່ຕັ້ງຊຶ່ງເປັນເຂດທີ່ມີລັກສະນະພິເສດຂອງແຂວງຢູນນານ ໂດຍຈັບເອົາກາລະໂອກາດອັນດີທາງດ້ານຍຸດທະສາດທີ່ລັດແລະແຂວງຢູນານພວມຈັດຕັ້ງປະຕິບັດໂຄງການ "ການຮ່ວມມືເສດຖະກິດອະນຸພາກພື້ນແມ່ນ້ຳລານຊາງ--ແມ່ນ້ຳຂອງ", "ການກໍ່ສ້າງເຂດການຄ້າເສລີຈີນ--ອາຊຽນ",ບຳລຸງສ້າງບຸກຄະລາກອນທີ່ຕ້ອງການຮີບດ່ວນດ້ວຍຫລາຍຮູບການສຳລັບການຮ່ວມມືອະນຸພາກພື້ນ,ຕັ້ງໜ້າດຳເນີນການຮ່ວມມືແລະແລກປ່ຽນທາງການສຶກສາກັບປະເທດອ້ອມຂ້າງ.

ເພື່ອບຳລຸງສ້າງບຸກຄະລາກອນທີ່ມີຄວາມຮູ້ດ້ານການຮ່ວມມື

ສາກົນ, ໂດຍສະເພາະແມ່ນຜູ້ມີຄວາມຮູ້ດ້ານການຮ່ວມມືອະນຸພາກພື້ນແມ່ນ້ຳຂອງ, ໂຮງຮຽນສຶກສາຊັ້ນສູງແຂວງຢູນນານຮ່ວມມືຕັ້ງໂຮງຮຽນກັບປະເທດໃກ້ຄຽງແລະພາກພື້ນນັ້ນ, ປະຈຸບັນໄດ້ຮ່ວມມືກັນຕັ້ງໂຮງຮຽນກັບ 8 ປະເທດອ້ອມຂ້າງແລ້ວ, ໄດ້ດຳເນີນໂຄງການຮ່ວມມື 35 ໂຄງການທີ່ນັບທັງໂຄງການສິດສອນພາສາຈີນຕໍ່ພາຍນອກ, ໂຄງການບຳລຸງສ້າງບຸກຄະລາກອນແລະໂຄງການຄົ້ນຄວ້າຮ່ວມກັນເປັນຕົ້ນ. ຊ່ວງ 5 ປີໃກ້ ໆ ມານີ້ ແຂວງຢູນນານສະເລ່ຍແຕ່ລະປີໄດ້ຈັດສົ່ງຄູອາຈານແລະນັກສຶກສາ 300ກວ່າທ່ານໄປແລກປ່ຽນແລະສຶກສາຢູ່ປະເທດໃກ້ຄຽງ. ມະຫາວິທະຍາໄລຊົນເຜົ່າຢູນນານແຕ່ລະປີໄດ້ຈັດສົ່ງຄູອາຈານແລະນັກສຶກສາ 150 ທ່ານທາງດ້ານວິຊາສະເພາະພາສາລາວ, ໄທ, ຫວຽດນາມແລະມຽນມາໄປສຶກສາຢູ່ໂຮງຮຽນຮ່ວມມືຂອງຝ່າຍກົງກັນຂ້າມ 1 ປີ, ວິທະຍາຄານການແພດພື້ນເມືອງຈີນຢູນນານແຕ່ປີ 2001 ເປັນຕົ້ນມາໄດ້ສ້າງການຜົວພັນຮ່ວມມືພາຍນອກກັບມະຫາວິທະຍາໄລອົງມົງກຸດລາຊະກຸມານສົງຂາ ປະເທດໄທ, ຕ່າງກໍ່ໄດ້ຈັດສົ່ງບຸກຄະລາກອນໄປມາຫາສູ່ກັນແລ້ວ 70 ກວ່າເທື່ອຄົນຈົນເທົ້າທຸກວັນນີ້.

ປີ 2004 ແຂວງຢູນນານໄດ້ຕັ້ງກອງທຶນອຸດໜູນການສຶກສາຂອງຄະນະປົກຄອງແຂວງທີ່ແຕ່ລະປີໄດ້ປະກອບທຶນ 1 ລ້ານ 8 ແສນຢວນຊຶ່ງເປັນແຫ່ງທຳອິດໃນທົ່ວປະເທດຈີນສຳລັບປະເທດໃກ້ຄຽງ, ເພື່ອດູດດຶງເອົາບຸກຄະລາກອນຂອງປະເທດໃກ້ຄຽງໄປສຶກສາຢູ່ຢູນນານໃຫ້ຫລາຍກວ່າເກົ່າ, ສົ່ງເສີມການບຳລຸງກໍ່ສ້າງບຸກຄະລາກອນພອນສະຫວັນຂອງການຮ່ວມມືອະນຸພາກພື້ນ, ມາຮອດປະຈຸບັນ ໄດ້ຮັບເອົານັກສຶກສາ 2 ຊຸດ 122 ຄົນແລ້ວ. ປີ 2005 ນັກສຶກສາຕ່າງປະເທດທີ່ມາສຶກສາເປັນໄລຍະຍາວແລະໄລຍະສັ້ນປະເພດຕ່າງ ໆຢູ່ຢູນນານໄດ້ບັນລຸເຖິງ 4700ກວ່າຄົນ, ໃນນັ້ນນັກສຶກສາທີ່ມາຈາກປະເທດໃກ້ຄຽງມີ 3000 ກວ່າຄົນ ກວມຈຳນວນທັງໝົດ 65.7%. ວິຊາສະເພາະນັບແຕ່ພາສາຈີນ, ແພດພື້ນເມືອງຈີນເປັນຕົ້ນຊຶ່ງເປັນຂະແໜງການສຶກສາດັ້ງເດີມແຜ່ກວ້າງໄປສູ່ຂະແໜງການສຶກສາວິທະຍາສາດເຕັກນິກ, ນິເວດວິທະຍາ, ເສດຖະກິດ, ການທ່ອງທ່ຽວແລະການຄຸ້ມຄອງເປັນຕົ້ນຫລາຍອົງເຂດຂະແໜງການສຶກສາ.



ຜູ້ແປພາສາ: ທອງຂຽນ ຂຳຕະກຸນ



# ໂຄງການທ່ອງທ່ຽວອຸດສາຫະກຳລາຍທຳ ອິດຂອງຢູນນານໄດ້ເປີດກວ້າງຕໍ່ແຂກທ່ອງທ່ຽວ

## 云南首个工业旅游项目向游客开放

从上个世纪50年代的一个小烟叶复烤厂到中国第一、亚洲第一和位列世界前茅，誓言“山高人为峰”的红塔集团，书写了太多的传奇故事。如今，游客花38元就可揭开红塔集团的神秘面纱。红塔工业旅游通道的开通意味着云南首个工业旅游项目开始运作。

ຈາກໂຮງງານອົບໃບຢາສູບຂະໜາດນ້ອຍໃນທົດສະວັດທີ 5 ຂຸມປີ 1950 ຂອງສະຕະວັດທີ່ແລ້ວ ກັບກາຍມາເປັນອັນດັບທີ 1 ຂອງປະເທດຈີນ,ອັນດັບທີ 1 ຂອງອາຊີແລະຢືນຢູ່ແຖວໜ້າຂອງໂລກ,ກຸ່ມຫົງທາ(ທາດແດງ)ທີ່ໄດ້ໃຫ້ຄຳສາບານວ່າ: "ພູສູງຄົນເປັນຍອດ "ນັ້ນໄດ້ຂຽນນິທານເລື່ອງອັດສະຈັນແບບເທບນິຍາຍຢ່າງຫລວງຫລາຍພາຍມາກ.ມາບັດນີ້,ແຂກທ່ອງທ່ຽວພຽງແຕ່ຈ່າຍເງິນ 38 ຢວນກໍ່ສາມາດເປີດຜ້າປົກໜ້າອັນເລິກລັບຂອງກຸ່ມຫົງທາອອກມາປະຈັກຕາ,ການເປີດຊ່ອງທ່ອງທ່ຽວມັນສະແດງວ່າ:ໂຄງການທ່ອງທ່ຽວອຸດສາຫະກຳລາຍທຳອິດຂອງຢູນນານໄດ້ເລີ່ມດຳເນີນກິດຈະການແລ້ວ.

ຢູ່ໃນບາງປະເທດແລະເຂດແຄວ້ນທີ່ຈະເລີນແລ້ວໂດຍເອົາກຳມະວິທີການຜະລິດອຸດສາຫະກຳ,ແບບແຜນແລະໂສມໜ້າຂອງໂຮງງານ,ພາບສະໜາມຊີວິດການທຳງານຂອງກຳມະກອນມາເປັນສິ່ງດູດດຶງຕົ້ນຕໍ,ເປັນສີສັນສະເພາະຂອງການທ່ອງທ່ຽວອຸດສາຫະກຳນັ້ນ,ມັກເປັນໜຶ່ງໃນຈຸດເດັ່ນຂອງແລວທາງທ່ອງທ່ຽວ.ພ້ອມກັນນັ້ນ,ພັດທະນາການທ່ອງທ່ຽວອຸດສາຫະກຳຍັງເປັນການຊຸກດັນການໂຄສະນາພາບພົດຂອງວິສາຫະກິດ,ຍົກສູງຊື່ສຽງຂອງຍີ່ຫໍ້ແລະສົ່ງເສີມການຈຳໜ່າຍອີກ.

ຈາກການລົງທຶນໃສ່ບານເຕະຂະຫຍາຍມາເປັນການທ່ອງທ່ຽວອຸດສາຫະກຳ,ກຸ່ມຫົງທາໄດ້ສະແຫວງຫາສິ່ງໃໝ່ ໆແລະໃຝ່ຫາການປ່ຽນແປງຢ່າງບໍ່ຢຸດຢັ້ງ.ຕາມທີ່ຊາບກັນມາ,ເພື່ອພັດທະນາການທ່ອງທ່ຽວອຸດສາຫະກຳ,ກຸ່ມຫົງທາໄດ້ລົງທຶນ 2 ຕື້ຢວນມາດັດສ້າງເຂດນິຄົມອຸດສາຫະກຳພູຫົງທາທີ່ເມືອງຢີຊີເຂດນິຄົມອຸດສາຫະກຳຫົງທາ.ການກໍ່ສ້າງໄດ້ອີງໃສ່ມາດຖານເຂດທິວທັດນິເວດວິທະຍາ AAAA ຂອງລັດກຳນົດຢ່າງສົມບູນ,ມະໂນຄະຕິຂອງການອອກແບບແຕ່ຕົ້ນຕະຫຼອດປາຍແມ່ນສອດສ່ອງໄປດ້ວຍຫົວຂໍ້ "ສິຂຽວນິຍົມ "ທີ່ "ຖະໜອມຫອມຮັກທຳມະຊາດແລະຖະໜອມຫອມຮັກສຸຂະພາບ ".ຊຶ່ງໄດ້ປະກົດທຳນອງໂສມໜ້າອັນໃໝ່ອ່ຽມທີ່ສະແດງອອກຄວາມປະສົມປະສານກັນລະຫວ່າງທຳມະຊາດກັບວິທະຍາສາດເຕັກນິກ,ການເຊື່ອມໂຍງກົມກຽວກັນລະຫວ່າງວິທະຍາສາດເຕັກນິກກັບມະນຸດສະສາດ.ໃນເຂດນິຄົມໄດ້ປະກອບດ້ວຍໂຄງການ ດັດແປງເທັກໂນໂລຊີອຸດສາຫະກຳທີ່ເຊື່ອມເຂົ້າໃນປັດໄຈການທ່ອງທ່ຽວ,ສ້າງເຂດວາງສະແດງຜະລິດຕະພັນວັດທະນະທຳຂອງວິສາຫະກິດດ້ວຍຮູບແບບຫໍພິພິທະພັນ,ເພື່ອສະແດງໃຫ້ເຫັນການພັດທະນາຂອງກຸ່ມຫົງທາ,ປະຫວັດການລິເລີ່ມສ້າງກິດຈະກຳ;ນອກນັ້ນຍັງປະກອບດ້ວຍສະໜາມຫລວງຂອງເຂດທີ່ຢູ່ໜ້າໂຮງງານ,ສວນສາທາລະນະນິເວດ 2 ແຫ່ງທີ່ຂຶ້ນກັບສວນສາທາລະນະດ້ວຍຫົວຂໍ້ພູຫົງທາ,ເປັນການພັດທະນາຢ່າງກົມກືນໂດດເດັ່ນລະຫວ່າງມະນຸດກັບທຳມະຊາດ.ປະຈຸບັນການທ່ຽວຊົມອຸດສາຫະກຳຫົງທານັ້ນຍັງບໍ່ຮັບແຂກລາຍຍ່ອຍ,ແຂກທ່ອງທ່ຽວສາມາດໄປສະໝັກເຂົ້າໃນຄະນະທ່ອງທ່ຽວທີ່ສຳນັກງານການທ່ອງທ່ຽວຈັດເປັນຄະນະທ່ອງທ່ຽວ.ຢູ່ໃນຂະບວນການທ່ອງທ່ຽວນັ້ນ ແຂກທ່ອງທ່ຽວສາມາດທ່ຽວຊົມສຳຜັດໂດຍຕົນເອງກັບບ່ອນ,ຫັດສະນະສຶກສາສາຍຜະລິດຂະໜາດໃຫຍ່ແບບທັນສະໄໝຂອງຫົງທາ,ຍັງສາມາດເຂົ້າໄປເຖິງຕຶກອາຄານທີ່ທຳງານແບບພູມປັນຍາຄົບຊຸດທັດສະນະສຶກສາແລະຊອກຮູ້ປະຫວັດການພັດທະນາຂອງກຸ່ມຫົງທາ,ວິທະຍາສາດເຕັກນິກຢາສູບ,ວັດທະນະທຳຢາສູບ ພ້ອມທັງທ່ຽວຊົມສາຍການຜະລິດການພັນກອກຢາແລະຫຸ້ມຫໍ່ຊອງຢາ 2 ພາກການຜະລິດແລະສາງເກັບມ້ຽນກາງຫາວ,ແລ້ວຈຶ່ງຂຶ້ນລົດໄປແທ່ນຊົມທິວທັດຂອງພູຊຽນກວ້າແນມລົງຊົມພາບທັງໝົດຂອງເຂດນິຄົມອຸດສາຫະກຳແລະພາບທັງໝົດຂອງເມືອງຢີຊີແລະເບິ່ງຮູບແບບເດີມທີ່ຂອງ "ທາດແດງ "(ຫົງທາ)ທີ່ສ້າງຂຶ້ນໃນສະໄໝລາຊະວົງຢວນ.







ພູມພາບພູຜາແມ່ນ້ຳຫລີຈຽງ(ກູ່ຍຫຼິນກອາງຊີ)

广西桂林漓江山水



# ຫວຽດນາມແລະກຳປູເຈຍສະແດງວ່າຈະເພີ່ມທະວີສາຍພົວພັນຮ່ວມມືມິດຕະພາບອັນເປັນມູນເຊື້ອຂອງສອງປະເທດ

## 越南和柬埔寨表示 将加强两国传统友好合作关系

越南国家主席陈德良表示，越南希望与柬埔寨方面共同努力，进一步巩固和发展两国传统友好合作关系。

ສົມເດັດນະໂລດົມ. ສີຫະມະນີພະເຈົ້າຊີວິດກຳປູເຈຍໄດ້ເດີນທາງໄປຢ້ຽມຢາມຫວຽດນາມທາງລັດຖະກິດຕາມຄຳເຊີນຂອງເຈີນດຶກເລືອງປະທານປະເທດຫວຽດນາມ. ໃນລະຫວ່າງທ່ານເຈີນດຶກເລືອງເຈລະຈາກັບສົມເດັດນະໂລດົມ. ສີຫະມະນີເຈົ້າຊີວິດກຳປູເຈຍນັ້ນທ່ານກ່າວວ່າ: "ຫວຽດນາມເອົາໃຈໃສ່ຕໍ່ການພັດທະນາສາຍພົວພັນມິດຕະພາບອັນເປັນມູນເຊື້ອກັບກຳປູເຈຍ, ສາຍພົວພັນອັນນີ້ເປັນສິ່ງປະເສີດເລີດລ້ຳຂອງສອງປະເທດ." ທ່ານສະແດງຄວາມເຊື່ອແນ່ວ່າ, ການເດີນທາງມາຢ້ຽມຢາມຫວຽດນາມຄັ້ງທຳອິດຂອງສົມເດັດພະເຈົ້າຊີວິດສີຫະມະນີເທື່ອນີ້ຈະຕ້ອງກາຍເປັນຫຼັກຂີດໝາຍຂອງປະຫວັດການພັດທະນາສາຍພົວພັນລະຫວ່າງສອງຊາດ.

ສົມເດັດສີຫະມະນີໄດ້ສະແດງໃນທ່າມກາງເຈລະຈານັ້ນວ່າ: ທ່ານປິຕິຍິນດີເປັນຢ່າງຍິ່ງທີ່ໄດ້ເຫັນສາຍພົວພັນສອງຊາດກຳປູເຈຍ--ຫວຽດນາມມີການພັດທະນາຢ່າງເລັວໄວ, ແລະຂອບອົກຂອບໃຈລັດຖະບານຫວຽດນາມທີ່ໄດ້ສະໜັບສະໜູນຊ່ວຍເຫຼືອກຳປູເຈຍ.

ໃນຂະນະທີ່ພົບປະກັນຂອງຜູ້ນຳສອງປະເທດນັ້ນສຳຄັນແມ່ນແລກປ່ຽນຄຳຄິດຄຳເຫັນຢ່າງກວ້າງຂວາງນຳກັນກ່ຽວກັບບັນຫາສາຍພົວພັນລະຫວ່າງສອງປະເທດແລະພາກພື້ນທີ່ສົນໃຈຮ່ວມກັນຕະຫຼອດຮອດບັນຫາລະຫວ່າງຊາດ.

ທ່ານເຈີນດຶກເລືອງປະທານປະເທດຫວຽດນາມສະແດງວ່າ: ຫວຽດນາມປາຖະໜາຈະພະຍາຍາມພ້ອມກັບຝ່າຍກຳປູເຈຍ, ປັບປຸງແລະພັດທະນາສາຍພົວພັນຮ່ວມມືມິດຕະພາບອັນເປັນມູນເຊື້ອຂອງສອງປະເທດຕື່ມອີກ.

ຜູ້ແປພາສາ: ທອງຂຽນ ຂຳຕະກຸນ

### 首届中国－东盟会展业高峰会召开

首届中国–东盟会展业国际合作高峰会(CAESIC 2006)在广西南宁召开.此次会议主题是合作、创新、共赢。本次峰会有近200位海内外会展业高层人士参加。

# ໄຂກອງປະຊຸມສຸດຍອດກ່ຽວກັບທຸລະກິດກອງປະຊຸມ ແລະງານວາງສະແດງຈີນ--ອາຊຽນເປັນຄັ້ງທຳອິດ




ກອງປະຊຸມສຸດຍອດຮ່ວມມືກ່ຽວກັບທຸລະກິດກອງປະຊຸມແລະງານວາງສະແດງຈີນ--ອາຊຽນ (CAESIC 2006) ຄັ້ງທຳອິດໄດ້ໄຂຂຶ້ນຢູ່ທີ່ນະຄອນນານໜິງກວາງຊີສປຈີນ,ຫົວຂໍ້ຂອງກອງປະຊຸມຄັ້ງນີ້ຄືຮ່ວມມື,ປະດິດສ້າງອັນໃໝ່ແລະຫາຜົນປະໂຫຍດຮ່ວມກັນ.

ກອງປະຊຸມສຸດຍອດຄັ້ງນີ້ມີບຸກຄົນຊັ້ນສູງຂອງທຸລະກິດກອງປະຊຸມແລະງານວາງສະແດງທີ່ມາຈາກພາຍໃນແລະຕ່າງປະເທດເກືອບ 200 ທ່ານເຂົ້າຮ່ວມ.ກອງປະຊຸມໂດຍແມ່ນກົມກິດ



ຈະການພັດທະນາການຄ້າຕໍ່ຕ່າງປະເທດຂອງກະຊວງການຄ້າຈີນ, ຫ້ອງການຄຸ້ມຄອງການວາງສະແດງຂອງສະມາຄົມສົ່ງເສີມການຄ້າຈີນ, ກອງເລຂາການວາງສະແດງສິນຄ້າຈີນ--ອາຊຽນ, ຄະນະປົກຄອງປະຊາຊົນນະຄອນນານໜິງ, ສຳນັກວາລະສານກອງປະຊຸມແລະງານວາງສະແດງແຫ່ງປະເທດຈີນຮ່ວມກັນເປັນເຈົ້າພາບຈັດທຳ ໂດຍມອບໃຫ້ສຳນັກວາລະສານກອງປະຊຸມແລະງານວາງສະແດງແຫ່ງປະເທດຈີນ, ສູນກອງປະຊຸມແລະງານວາງສະແດງສາກົນນານໜິງເປັນຜູ້ຮັບຈັດຂຶ້ນ.

ນັບແຕ່ຈີນກັບອາຊຽນໄດ້ສ້າງການພົວພັນໝູ່ຄູ່ເຈລະຈາ ປີ 1991 ເປັນຕົ້ນມາ, ມູນຄ່າການຄ້າສອງຝ່າຍໄດ້ຮັກສາອັດຕາເພີ່ມໄວຄ່ອນຂ້າງສູງ. ຕາມສະຖິຕິຈາກພາກພາສີໃຫ້ຮູ້ວ່າ: ມູນຄ່າການຄ້າສອງຝ່າຍຈີນ -- ອາຊຽນຈາກ 66.91 ໂດລາສະຫະລັດຂອງປີ 1990 ເພີ່ມຂຶ້ນເປັນ 1058.80 ໂດລາສະຫະລັດໃນປີ 2004, ອັດຕາເພີ່ມຂຶ້ນສະເລ່ຍຕໍ່ປີບັນລຸເຖິງ 21.81%.

ປີ 2006 ເປັນປີສ້າງການພົວພັນໝູ່ຄູ່ເຈລະຈາລະຫວ່າງຈີນ--ອາຊຽນຄົບຮອບ 15 ປີແລະກໍ່ແມ່ນ "ປີຮ່ວມມືມິດຕະພາບຈີນ--ອາຊຽນ". ກອງປະຊຸມສຸດຍອດການຮ່ວມມືສາກົນກ່ຽວກັບທຸລະກິດກອງປະຊຸມແລະງານວາງສະແດງຈີນ--ອາຊຽນ "ທີ່ກະກຽມຈັດຂຶ້ນໃນຄັ້ງນີ້ນັ້ນ, ກໍ່ຍິ່ງຈະຊ່ວຍຊຸກຍູ້ເພີ່ມທະວີການແລກປ່ຽນຂໍ້ມູນຂ່າວສານແລະ ໂຄງການຮ່ວມມືລະຫວ່າງອົງການຈັດຕັ້ງຂະແໜງອາຊີບການວາງສະແດງແລະວິສາຫະກິດການວາງສະແດງໃນພາກພື້ນຈີນ--ອາຊຽນ, ຊຸກຍູ້ຂະແໜງອາຊີບກ່ຽວກັບກອງປະຊຸມແລະງານວາງສະແດງພາຍໃນພາກພື້ນໃຫ້ມີການພັດທະນາ, ເພື່ອບໍລິການຮັບໃຊ້ການສ້າງເຂດການຄ້າເສລີຈີນ--ອາຊຽນໃຫ້ດີຂຶ້ນຕື່ມອີກ.

ເນື້ອໃນຂອງກອງປະຊຸມສຸດຍອດໃນຄັ້ງນີ້ ນັບທັງກອງປະຊຸມໂຕະມົນ ໂຄງການຮ່ວມມືກ່ຽວກັບກອງປະຊຸມແລະງານວາງສະແດງຈີນ--ອາຊຽນ, ພິທີແຈກຮາງວັນ "ດອກຍອຍ "ສົ່ງເສີມການຄ້າຈີນ--ອາຊຽນ, ກອງປະຊຸມສຳມະນາມາດຖານອະນຸຍາດໃຫ້ເຂົ້າສູ່ອົງກອນບໍລິການກັບທີ່ຂອງງານນິທັດສະການຈີນ--ອາຊຽນແລະການສຳຫຼວດທຸລະກິດກອງປະຊຸມແລະງານວາງສະແດງກັບການເຈລະຈາການຄ້າຂອງຫວຽດນາມເປັນຕົ້ນ.



ເຫີຢີເຟີຍ ໜຸ່ມນັກສະແດງຢູນນານ

云南青年演员 何雨菲

ຖ່າຍພາບະ ຢາງເຄີຫຼິນ

杨克林 摄

文: 李 力
ຜູ້ແປພາສາ: ທອງຂຽນ ອຳຕະກຸນ



# ໝາກໄມ້ຂອງຈີນສົ່ງກິ່ນຫອມ ໄປທົ່ວຕະຫລາດອາຊີອາຄະເນ

## 中国水果飘香东南亚市场

以前印尼水果市场上的进口货基本都来自美国、日本等农业发达国家的产品，质量好价格也高。随着中国农业的快速发展，亚洲地区经济合作领域进一步拓宽以及中国-东盟自贸区的启动，来自中国的各种水果也相继出现在东南亚国家的市场上，并受到当地广大消费者的欢迎。



ຕາມຄວາມຊົງຈຳຂອງນັກຂ່າວແລ້ວສິນຄ້ານຳເຂົ້າໃນ ຕະຫລາດໝາກໄມ້ຂອງອິນໂດເນເຊຍໃນເມື່ອກ່ອນ ດ້ານພື້ນຖານແລ້ວລ້ວນແຕ່ເປັນຜະລິດຕະພັນຂອງປະເທດຈະເລີນແລ້ວທາງກະສິກຳ ເຊັ່ນ: ອາເມລິກາ ແລະ ຍີ່ປຸ່ນເປັນຕົ້ນ, ຄຸນນະພາບດີລາຄາກໍ ແພງ. ຄຽງຄູ່ກັບກະສິກຳຂອງຈີນມີການພັດທະນາຢ່າງວ່ອງໄວ, ຂົງເຂດການຮ່ວມມືທາງເສດຖະກິດໃນພາກພື້ນອາຊີ ໄດ້ຖືກບຸກ ເບີກໃຫ້ກວ້າງອອກຕື່ມແລະເຂດການຄ້າເສລີຈີນ-ອາຊຽນເລີ່ມມີການເຄື່ອນເໜັງ, ໝາກໄມ້ແຕ່ລະຊະນິດທີ່ມາຈາກ ປະເທດຈີນກໍທະຍອຍປະກົດຕົວໃນຕະຫລາດຂອງບັນດາປະເທດອາຊີອາຄະເນ, ພ້ອມທັງໄດ້ຮັບຄວາມນິຍົມຊົມຊອບຈາກຜູ້ບໍລິໂພກຢ່າງກວ້າງຂວາງຂອງທ້ອງຖິ່ນດັ່ງກ່າວ.

ຫວ່າງມໍ່ໆມານີ້ ມີນັກຂ່າວໄດ້ໄປສຳພາດຕໍ່ຊຸບເປີມາກເກັດ ແລະ ຮ້ານຄ້າຂາຍໝາກໄມ້ສະເພາະບາງແຫ່ງໃນຈາກາ ຕາ, ມີຄວາມຮູ້ສຶກປະທັບໃຈຕໍ່ສະພາບການໝາກໄມ້ຂອງຈີນ ໃນຕະຫລາດຕ່າງປະເທດ.

ຮ້ານຄ້າ “A1FUSH” ເປັນຮ້ານຄ້າທີ່ຂາຍໝາກໄມ້ ສະເພາະທີ່ອ່າວລີຊີ່ໃນຈາກາຕາ, ຕາມນັກຂ່າວປະເມີນໂດຍເຜີນ ໆ ແລ້ວ, ຜະລິດພັນໝາກໄມ້ທີ່ນຳເຂົ້າເກືອບວ່າເຄິ່ງໜຶ່ງຂອງຮ້ານ ດັ່ງກ່າວລ້ວນແຕ່ມາຈາກປະເທດຈີນ. ມີແມ່ບ້ານຜູ້ໜຶ່ງບອກເລົ່າກັບນັກຂ່າວວ່າ, ຍ້ອນວ່າຄຸນນະພາບດີ, ຜະລິດຜົນຫລາກຫລາຍ, ລາຄາຖືກ. ດັ່ງນັ້ນ, ໝາກໄມ້ຂອງປະເທດຈີນພວມ ກາຍເປັນເປົ້າໝາຍການເລືອກຊື້ຕົ້ນຕໍຂອງຜູ້ບໍລິໂພກໃນທ້ອງຖິ່ນ ນີ້, ໂດຍສະເພາະເຊັ່ນໝາກຍໍ່າໄຍ, ໝາກລິ້ນຈີ່ ແລະ ໝາກ ຈອງຊາລີ ເປັນຕົ້ນ ຊຶ່ງໝາກໄມ້ບາງຊະນິດທີ່ຢູ່ທ້ອງຖິ່ນຂອງອິນ ໂດເນເຊຍກໍມີນັ້ນ, ຍິ່ງໄດ້ຮັບການຈັບຕາມອງຈາກຜູ້ບໍລິໂພກໃນ ທ້ອງຖິ່ນ.

ຊຸບເປີມາກເກັດກາເຣີຟົວ ທີ່ມີທີ່ຕັ້ງຢູ່ໃນຕອນດິນເຂດສາມຫລ່ຽມທອງຄຳ ຊູ້ນິນອ້ານຂອງຈາກາຕານັ້ນມີເນື້ອທີ່ໃຫຍ່ສົມຄວນ. ຢູ່ໃນເຂດຈຳໜ່າຍໝາກໄມ້ນັ້ນ, ມີໝາກໂປມ, ໝາກຈອງ, ໝາກກ້ຽງຫວານ, ໝາກພຸກຊ່າທຽນທີ່ມາຈາກປະເທດຈີນ ວາງ ຂາຍໄວ້ຢູ່ບ່ອນທີ່ປະຈັກຕາ, ຢູ່ອ້ອມຂ້າງເຕັມໄປດ້ວຍຜູ້ຄືນບຽດ ກັນເລືອກຊື້.

ຜູ້ບໍລິໂພກຂອງອາຊີອາຄະເນຫລັງຈາກໄດ້ຊີມລົດຊາດຂອງໝາກທັນຊ່ານຕົງ, ໝາກແຕ່ງສຸກຣາມີຂອງຊິ່ນຈ່ຽງ, ໝາ ກຄາຍນໍ້າເຜິ້ງຂອງເຮີໄປ່, ຍັງມີຜະລິດຕະພັນໝາກລິ້ນຈີ່ແລະໝາກຍໍ່າໄຍທີ່ມີຄຸນນະພາບຂ້ອນຂ້າງດີນັ້ນແລ້ວເຫັນວ່າ,ຂໍແຕ່ຮັບປະກັນຄຸນນະພາບ ແລະ ມີຄວາມສົດ, ຫຸ້ມຫໍ່ສວຍງາມ, ສະໜອງສິນຄ້າທັນກັບເວລາແລ້ວ ພິມໃບໂຄສະນາທີ່ສວຍງາມດ້ວຍພາສາຂອງທ້ອງຖິ່ນໃສ່ໃນຫີບໝາກໄມ້ນັ້ນອີກ,ຖ້າເປັນແນວນັ້ນແລ້ວໝາກໄມ້ທີ່ມີສີສັນຂອງປະເທດຈີນດັ່ງກ່າວນັ້ນຢູ່ອາຊີອາຄະເນກໍຈະບໍ່ຕ້ອງກັງວົນວ່າຈະຂາຍບໍ່ອອກດ້ວຍລາຄາດີ.



# ສະຖາປັດຕະຍະກຳຊົນເຜົ່າປ່າຍ ທີ່ມີທ່ານອງເອກະລັກສະເພາະ



## 风格独特的白族建筑

云南白族的民居住宅，以三坊一照壁为特色，但因各村落的自然环境和技术水平不同，创造出多种多样的建筑形式。

ເນື່ອງຈາກວ່າສະພາບແວດລ້ອມທຳມະຊາດແລະລະດັບວິຊາເຕັກນິກໃນແຕ່ລະເຂດແຕກຕ່າງກັນ,ເຮືອນຊານບ້ານຢູ່ຂອງຊົນເຜົ່າປ່າຍຢູນນານ,ເກີດມີຮູບແບບຫຼາກຫຼາຍ.ປະຊາຊົນເຜົ່າປ່າຍທີ່ອາໄສຢູ່ເຂດພູດອຍອາກາດໜາວສ່ວນຫຼາຍແມ່ນ"ເຮືອນໄມ້ທ່ອນ"ຫຼື"ເຮືອນແອ້ມດ້ວຍຮົ້ວໄມ້ໄຜ່"ທີ່ປຸກເປັນຫ້ອງດຽວຫລືສອງຫ້ອງລຽນຕິດກັນ.ສ່ວນປະຊາຊົນເຜົ່າປ່າຍທີ່ຢູ່ເຂດທົ່ງພຽງສ່ວນຫຼາຍສ້າງເປັນໂຄງປະກອບໄມ້ມຸງດ້ວຍດິນຂໍ,ສາມຫ້ອງແປະກັນມີຝາບັງຕາຢູ່ນອກປະຕູຫ້ອງ ໂຖງຫລືສ້າງເປັນ 4 ຫ້ອງຈະຕຸລັດມີເດີ່ນລະຫວ່າງກາງກວ້າງຂວາງ,ສາມາດຮັບເອົາແສງແດດຢ່າງພຽງພໍ.ມີຫຼາຍເຮືອນຍັງສ້າງເປັນຖານປູກດອກໄມ້,ປູກຕົ້ນໝາກພິລາ,ດອກຊາ,ດອກຈຳປີ,ດອກກູ່ຍ ຕະຫຼົບກິ່ນຫອມຫວນໄປທົ່ວບໍລິເວນ,ມີສະພາບແວດລ້ອມງົດງາມສະຫວາດສະເຫວີຍ.









ເມືອງຕາລີເຕັມໄປດ້ວຍຫີນສີລາ, ສະນັ້ນ, ຫຼັງເຮືອນອາໄສຢູ່ຂອງຊົນເຜົ່າປ່າຍສ່ວນມາກໝູນໃຊ້ວັດສະດຸກໍ່ສ້າງກັບບ່ອນ, ໂດຍໃຊ້ຫີນເປັນຕົ້ນຕໍ. ໄທບ້ານໄທເມືອງກ່າວຄໍາພັງເພີຍໄວ້ວ່າ: "ຕາລີມີສິ່ງປະເສີດສາມຢ່າງ, ເອົາກ້ອນຫີນກໍ່ຝາກໍາແພງ ກໍາແພງບໍ່ພັງທະລາຍ" ວ່າຊັ້ນ. ນັ້ນມັນໝາຍຄວາມວ່າ ຈຸດພິເສດທີ່ໃຊ້ຫີນເປັນວັດສະດຸປຸກສ້າງຫຼັງເຮືອນຂອງເຂົາເຈົ້ານັ້ນແຫຼະ. ຫີນສີລາບໍ່ສະເພາະແຕ່ເອົາມາສ້າງພື້ນຖານປຸກເຮືອນ ກໍ່ຝາກໍາແພງເທົ່ານັ້ນ, ຍັງເອົາມາເຮັດຫົວຂື່ຂອບປ່ອງຢ້ຽມອີກ. ໄທເຜົ່າປ່າຍ ພິຖີພິຖັນນໍາສະພາບແວດລ້ອມເຮືອນຢູ່ທີ່ສະອາດສະອ້າງສົດສວຍ. ຢູ່ເດີ່ນບ້ານຂອງແຕ່ລະເຮືອນກໍ່ເອ້ໄປດ້ວຍຖານປູກດອກໄມ້, ກະຖາງດອກໄມ້ໃບຫຍ້ານາ ໆ ຊະນິດແລະຕົ້ນໄມ້ກິນໝາກ. ການປູກດອກໄມ້ຖະໜອມຫອມຮັກດອກໄມ້ເປັນມູນເຊື້ອອັນດີງາມຂອງໄທເຜົ່າປ່າຍ.

ປະຊາຊົນເຜົ່າປ່າຍໄດ້ເອົາໃຈໃສ່ຕໍ່ການກໍ່ສ້າງຝາບັງຕາຢູ່ໜ້າປະຕູແລະຜັກຕູໂຂງໜ້າບ້ານ. ຝາບັງຕາລວາດທາດ້ວຍປູນຂາວ, ວານຜູ້ຊົງຄຸນວຸດທິມີຊື່ສຽງຂຽນໂຕໜັງສືໃຫຍ່ມີຄວາມໝາຍ: "ໝູ່ດວງມາລາບານແຍ້ມເປັ່ງແສງປະກາຍເຮືອງຮຸ່ງ" "ພະອຸໄທໃສສ່ອງ" ຫລື "ວາດສະໜາຄວາມສຸກ" "ອາຍຸໝັ້ນຂວັນຍືນ" ເປັນຕົ້ນຊຶ່ງເປັນສັນຍາລັກແຫ່ງຄວາມສິລິມຸງຄຸນສົມປາຖະໜາທຸກປະການ. ຝາແອ້ມເຮືອນກໍ່ມີຮູບແຕ້ມລວດລາຍພູຜາແມ່ນໍ້າ, ສັກກຸນາ ມາລາແລະແມງໄມ້ປູປານາ ໆ ຊະນິດ, ມູມແຈກໍ່ປະດັບຕົກແຕ່ງຢ່າງພິຖີພິຖັນມີຊີວິດຊີວາ. ປະຕູໂຂງໜ້າບ້ານຍິ່ງເປັນສິ່ງກໍ່ສ້າງທີ່ມີທໍານອງເອກະລັກພິເສດ ມັນໄດ້ເປັນປັນຍາສິລະປະຂອງປະຊາຊົນເຜົ່າປ່າຍ. ລວດລາຍໄຕມິຕິທີ່ປະກອບດ້ວຍຮູບດິນປັ້ນ, ຮູບແກະສະຫຼັກໄມ້ແລະຮູບຄວັດຫີນອ່ອນ. ການປະດິດປະດອຍ ປານີດຈົບງາມ, ກໍ່ບໍ່ຕໍ່າແຕ້ມລວດລາຍແກະສະຫຼັກໃນຫໍໂຮງຜາສາດ. ປະຕູໂຂງໜ້າບ້ານແລະບານປະຕູອັ້ນບໍ່ໄດ້ໃຊ້ເຫຼັກຕາປູຕອກໃສ່ຈັກດີ້ພຽງແຕ່ສື່ອຮູເຮັດເດືອກີບໃສ່ຕິດກັນ, ແຕ່ມັນກໍ່ແໜ້ນແກ່ນທົນທານ. ທັງໝົດດັ່ງກ່າວນີ້ລ້ວນແຕ່ໄດ້ສະແດງເຖິງລະດັບສິລະປະສະຖາປັດຕະຍະກໍາຂອງປະຊາຊົນໄທເຜົ່າປ່າຍຢ່າງເຕັມສ່ວນ.



# ບຸນດື່ມນົມສົ້ມຂອງເຜົ່າຕິເບດ

**藏族雪顿节**

雪顿节是藏族人民的重要节日之一，每年藏历7月1日举行，为期4、5天。雪顿是藏语的译音。在藏语中，“雪”的意思是酸奶子，“顿”的意思是宴，雪顿节按藏语的解释。就是喝酸奶子的节日。

ບຸນເຊຍຕຸນ(ບຸນດື່ມນົມສົ້ມ)ເປັນເທດສະການທີ່ສໍາຄັນຂອງປະຊາຊົນເຜົ່າຕິເບດ,ຈັດຂຶ້ນໃນວັນທີ 1 ເດືອນ 7 ຕາມປະຕິທິນຕິເບດທຸກປີ,ວັນກັນ 4 -5 ມື້.ເຊຍຕຸນແມ່ນແປຕາມສຽງພາສາຕິເບດ.ຄໍາວ່າ "ເຊຍ" ແມ່ນນົມສົ້ມ, "ຕຸນ" ແມ່ນກິນລ້ຽງ,ສະນັ້ນບຸບເຊຍຕຸນກໍ່ແປວ່າ ບຸນດື່ມນົມສົ້ມນັ້ນເອງ.

ບຸນດື່ມນົມສົ້ມ ເດີມທີເປັນພຽງແຕ່ການເຄື່ອນໄຫວທາງສາສະໜາ,ຕາມຂໍ້ກໍານົດຂອງນິກາຍເກີລູສາສະໜາລາມະ(ຫລືຮຽກວ່ານິກາຍເຫຼືອງ),ວັນທີ 15 ເດືອນ 6 ຫາວັນທີ 30 ເດືອນ 7 ເປັນໄລຍະຫວງຫ້າມ,ຫ້າມພະສົງລາມະໃນວັດວາອາຣາມນ້ອຍໃຫຍ່ສັງກັດນິກາຍເຫຼືອງທົ່ວຕິເບດ ບໍ່ໃຫ້ອອກວັດໄປເຄື່ອນໄຫວຢູ່ຂ້າງນອກເພື່ອຫຼີກເວັ້ນຈະໄປຢຽບມົດແມງຕາຍ "ກະທໍາບາບຕໍ່ບຸນກຸສົນ" ວ່າຊັ້ນ.ເມື່ອຮອດວັນທີ 30 ເດືອນ 7 ໝົດວັນກໍານົດ,ດາໄລລາມະຊົງລົງຄໍາສັ່ງເລີກຄໍາສັ່ງເກືອດຫ້າມ,ບັນດາພະສົງລາມະຈຶ່ງທະຍອຍກັນອອກຈາກວັດລົງພູ,ຊາວລ້ຽງປະສຸສັດກໍ່ພາກັນຕັກບາດຢາດນໍ້າທານນົມສົ້ມ,ສ່ວນບັນດາພະສົງລາມະຮັບເອົານົມສົ້ມເທື່ອໃດກໍ່ສົ່ງພອນອັນປະເສີດຈະເລີນ

ດັ່ງກ່າວ,ດາໄລອົງທີ 5 ໄດ້ຊຳເກົ້າສົ່ງພອນໃຫ້ຜູ້ມາປະເຄນນົມສົ້ມ.ເພື່ອເພີ່ມບັນຍາກາດອັນມ່ວນຊື່ນລື່ນເລີງ,ຢູ່ວັດເຈີປາງຍັງທຳການສະແດງລະຄອນຕິເບດ.ລະຄອນພື້ນເມືອງຕິເບດໄດ້ດຶງດູດບ່າວສາວຍິງຊາຍຕິເບດທີ່ນຸ່ງເຄື່ອງເອ້ຢ້ອງປາງບຸນແລະທັງປະດັບດ້ວຍເຄື່ອງຕົກແຕ່ງ ຫລັ່ງໄຫຼມາຊົມເບິ່ງ.ນັບແຕ່ນັ້ນມາ,ການເຄື່ອນໄຫວປະເຄນນົມສົ້ມດັ່ງກ່າວກໍ່ອຸດົມສົມບູນຫຼາຍຫຼາກ,ເລີຍກາຍເປັນບຸນມະໂຫລານຂອງຊາວຕິເບດ,ແລະຄ່ອຍຄ່ອຍກາຍເປັນພິທີເທດສະການປະຈຳ,ຖືກຮຽກກັນວ່າ ບຸນເຊຍຕຸນ(ບຸນດື່ມນົມສົ້ມ)ນັ້ນເອງ.







ໄປດ້ວຍສັດສາວາສິ່ງແດ່ຊາວລ້ຽງປະສຸສັດ.ຊາວຕິເບດເມື່ອໄດ້ຮັບຄຳອວຍພອນດັ່ງກ່າວກໍ່ຮູ້ສຶກຜະເອີບເປີບໃຈຢ່າງຍິ່ງ,ຕໍ່ມາທຸກ ໆປີຈຶ່ງທານນົມສົ້ມແດ່ພະສົງລາມະຈົນກາຍເປັນຮີດຄອງປະເພນີເທື່ອລະກ້າວ.

ຮອດທ້າຍສະຕະວັດທີ 17 ແລະຕົ້ນສະຕະວັດທີ 18 ,ຣ່ອງເຕ້ລາຊະວົງຊິງໄດ້ຊົງພະລາຊະແຕ່ງຕັ້ງດາໄລລາມະອົງທີ 5ແລະປັນເຊນອົງທີ 5 ,ຊົງພະລາຊະທານປຶ້ມຄຳແລະຕາປະທັບຄຳ.ເມື່ອຮອດຍາມຫວງຫ້າມຂອງວັດວາທຸກປີລະດູຮ້ອນ,ຊາວຕິເບດເປັນຈຳນວນຫຼວງຫຼາຍໄດ້ໄປວັດເຈີປາງປະເຄນນົມສົ້ມແດ່ດາໄລອົງທີ 5 ກັບປັນເຊນອົງທີ 5 ຕະຫຼອດຮອດບັນດາພະສົງທີ່ວັດ



# ວັດຊົງຈັນຢູນນານ

云南松赞林寺

ຖ່າຍພາບະ ລີເຈິ່ນ

李 政 摄影



## 云南乳饼

云南盛产乳饼。由于乳饼营养丰富，味道鲜美，食用方便，可烹制成各种菜肴，加之制作简单，容易保存，深受人们喜爱。

# ເນີຍແຂງແບ້ຂອງຢູນນານ

ປ່າຫີນ,ກອຍຊານເມືອງລູ່ນານແຂວງຢູນນານເປັນບ່ອນຜະລິດເນີຍແຂງແບ້.ເນີຍແຂງແບ້ນີ້ແມ່ນເອົານົມສົດແບ້ມາຕົ້ມຟົດແລ້ວປະສົມນ້ຳສົ້ມບໍລິໂພກ,ເມື່ອມັນແຂ້ນດີຈຶ່ງກົດໜີບເປັນກ້ອນ,ຕາມທຳມະດາໃຊ້ນົມແບ້ 5 ກິໂລກຣາມຜະລິດໄດ້ເນີຍແຂງ 1 ກິໂລກຣາມ.ເນີຍແຂງແບ້ທີ່ມີຄຸນະພາບຍອດຢ້ຽມມີສີຂາວອົມເຫຼືອງແດ່,ແລະມີມັນຊຶມປາສະຈາກລົດສົ້ມ.ຊາວພື້ນເມືອງເອົາເນີຍແຂງແບ້ສູ້ໃສ່ໄຫອັດໃຫ້ແຈບສາມາດຮັກສາໄວ້ເຄິ່ງປີບໍ່ເສື່ອມທາດ.

ເນື່ອງຈາກເນີຍແຂງແບ້ມີທາດບຳລຸງຫຼາຍ,ລົດແຊບຊ້ອຍດີ,ກິນກໍ່ສະດວກ,ຈະເອົາປຸງແຕ່ງເປັນອາຫານລົດຊາດຕ່າງກັນ ມັນກໍ່ງ່າຍດາຍ ຈະຮັກສາກໍ່ບໍ່ຍາກ,ໄດ້ຄວາມນິຍົມກັນຫຼາຍ.ເປັນຕົ້ນຄື:ເນີຍແຂງແນບປ່ຽງຊຳບົ່ງຊຽນເວີຍ,ວິທີເຮັດຝານເນີຍແຂງແລະຊຳບົ່ງເປັນແຜ່ນຍາວສີ່ລ່ຽມບາງ ໆສະເໝີກັນ,ເລືອກເອົາແຜ່ນຊີ້ນຊຳບົ່ງມີມັນແດ່,ໃຊ້ເນີຍແຂງສອງແຜ່ນແນບຊຳບົ່ງໄວ້ໜຶ່ງແຜ່ນ ຊ້ອນກັນໃສ່ຖ້ວຍໜຶ້ງໃຫ້ສຸກ,ແລ້ວເອົານ້ຳແກງແລະນ້ຳມັນໄກ່ລາດໃສ່ໜ້າ,ທັງເດັດເອົາຍອດຜັກຖົ່ວແຂກຮອງໃສ່ມີສີສັນຂຽວງາມແກມຂາວແດງກິນແລ້ວຫອມນົວຖືກປາກ.

ຍັງມີຊື່ອາຫານເຍື່ອງໜຶ່ງມ່ວນ ໆ ຮຽກວ່າ:ກົບນັ່ງຢ່ອງຢໍ້ຜະລານຫີນ.ອາຫານເຍື່ອງດັ່ງກ່າວແມ່ນເອົາຖົ່ວໂປ້ມືອ່ອນຂົ້ວໃສ່ຕ່ອນເນີຍແຂງກວນແປ້ງປຽກ,ກິນແລ້ວມີກິ່ນຫອມແຊບນົວ,ເປັນອາຫານປະຊາຊົນຢູນນານຊອບມັກກິນບໍ່ເປີດເປັນ.

ເຫັດດາວແຫຂົ້ວໃສ່ເນີຍແຂງ:ປະສົມຊຳບົ່ງຊຽນເວີຍແລະຊີ້ນໄກ່,ຫົວກາລົດແລະຜັກກາດຫອມໂຮຍເຄື່ອງເທດໃສ່ຂົ້ວໃຫ້ສຸກແລ້ວກໍ່ຮັບປະທານອາຫານໄດ້,ອາຫານເຍື່ອງດັ່ງກ່າວມີສີສັນສົດຊື່ນແລະກິ່ນລົດຫອມນົວທັງມີທາດບຳລຸງຫຼາຍຢ່າງ.

ຜູ້ແປພາສາ: ທອງຂຽນ ອຳຕະກຸນ



you kūn míng xī shān sēn lín gōng yuán
游 昆 明 西 山 森 林 公 园

# ທ່ຽວຊົມສວນສາທາລະນະປ່າໄມ້ຊີ່ຊ່ານທີ່ຄຸນໝິງ

nǐ qù guò kūn míng xī shān sēn lín gōng yuán
——你 去 过 昆 明 西 山 森 林 公 园
ma
吗?

-- ທ່ານເຄີຍໄປທ່ຽວສວນສາທາລະນະປ່າໄມ້ຊີ່ຊ່ານທີ່ຄຸນໝິງ ນັ້ນຫລືບໍ່?

méi yǒu
——没 有。

-- ບໍ່ເຄີຍໄປເທື່ອ.

xī shān sēn lín hěn zhí dé yī qù
——西 山 森 林 很 值 得 一 去!

-- ປ່າໄມ້ຊີ່ຊ່ານເປັນບ່ອນທີ່ໜ້າໄປທ່ຽວຊົມໄດ!

wèi shén me
——为 什 么?

-- ເປັນຫຍັງຈຶ່ງວ່າແນວນັ້ນ?

nà li fēng jǐng měi sēn lín mào mì kōng qì
——那 里 风 景 美, 森 林 茂 密, 空 气
qīng xīn jǐng sè yí rén
清 新, 景 色 宜 人。

-- ບ່ອນຫັ້ນມີທິວທັດສວຍງາມ,ປ່າໄມ້ດົກໜາ,ອາກາດປອດ ໂປ່ງ,ພູມພາບອໍລະຊອນວອນໃຈ.

ò zhēn xiǎng mǎ shàng qù tǐ yàn yí xià
——哦, 真 想 马 上 去 体 验 一 下。

-- ໂອ!ຂ້ອຍຊັ້ນຈັ່ງແມ່ນຢາກໄປສຳຜັດໂດຍຕົນເອງໂລດ.

rú guǒ zài dēng shàng lóng mén bù jǐn kě yǐ
——如 果 再 登 上 龙 门, 不 仅 可 以
guān rì chū hái néng bǎ wǔ bǎi lǐ diān chí jìn
观 日 出, 还 能 把 五 百 里 滇 池 尽
shōu yǎn dǐ
收 眼 底!

-- ຖ້າຫາກໄດ່ຂຶ້ນປະຕູລວງ ບໍ່ພຽງແຕ່ສາມາດໄດ້ຊົມຕາເວັນ ຂຶ້ນຍັງສາມາດທອດສາຍຕາເບິ່ງກວມໜອງແສ 500 ລີ້ (250 ກິໂລແມັດ)ອີກຊ້ຳ.

nà zěn me qù ne
——那 怎 么 去 呢?

-- ຂ້ອຍຊັ້ນຈະໄປດ້ວຍວິທີໃດ?

dào liáng jiā hé chéng liù lù gōng jiāo chē
——到 梁 家 河 乘 6 路 公 交 车
jiù hěn fāng biàn de
就 很 方 便 的。

-- ກະໄປຂຶ້ນລົດເມປະຈຳທາງສາຍ 6 ທີ່ແລວຈາເຫີ ກໍ່ສະດວກ ສະບາຍທີ່ສຸດ.

hǎo zhè ge zhōu mò jiù qù
——好, 这 个 周 末 就 去!

-- ເອີດີລະ,ທ້າຍອາທິດນີ້ຈະໄປໂລດ!













**《占芭》杂志老挝发行、销售代理处： 电话：00856-21-213191**

ຈຳປາ ຮ້ານ ແສງດາວຂາຍປຶ້ມ Tel:00856-21-213191


Welcome to Laos... Land of Timeless Beauty
ການບິນລາວ
Lao Airlines
The Beauty of Lao Hospitality